[2009]

# ກາລະໂອກາດເຂົ້າສູ່ຕະຫຼາດ ຕ່າງປະເທດຂອງ ສປປ ລາວ











ກະຊວງອຸດສາຫະກຳ ແລະ ການຄ້າ
ກົມນະໂຍບາຍການຄ້າຕ່າງປະເທດ

AISP
GSP
APTA
CEPT

ກາລະໂອກາດເຂົ້າສູ່ຕະຫຼາດຕ່າງປະເທດຂອງ ສປປ ລາວ 2009


ກະຊວງອຸດສາຫະກຳ ແລະ ການຄ້າ, ກົມນະໂຍບາຍການຄ້າຕ່າງປະເທດ
ຖະໜົນໂພນໄຊ, ຕູ້ ປ.ນ. 4107, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທ: (+856) 21 415931 ແຟັກ: (+856) 21 450066
ເວັບໄຊ້: www.moic.gov.la/ftpd
ອີເມລ໌: bilateral@laopdr.com



ສະໜັບສະໜູນໂດຍ: ໜ່ວຍງານຈັດຕັ້ງປະຕິບັດໂຄງການ (NIU)

# ກາລະ ໂອກາດເຂົ້າສູ່ຕະຫຼາດ
# ຕ່າງປະເທດຂອງ ສປປ ລາວ



**ກະກຽມໂດຍ:**

ທ່ານ ນາງ ພວງຜະກາ ອຸດົມ

ທ່ານ ນາງ ລັດທະນາ ດວງບຸບຜາ

ທ່ານ ແສງອາລຸນ ວິໄລສັກ

ທ່ານ ອິດທິລິດ ຍັງນຸວົງ

ທ່ານ ນາງ ມະນີວັນ ລໍເປຼຍຢາວ

ທ່ານ ຕຸລາໄຊ ພັນທະວົງ

**ກວດແກ້ໂດຍ:**

ທ່ານ ນາງ ຂັນລາສີ ແກ້ວບຸນພັນ,

ຮອງຫົວໜ້າກົມນະໂຍບາຍການຄ້າຕ່າງປະເທດ

ກະຊວງອຸດສາຫະກຳ ແລະ ການຄ້າ

**ອອກແບບ ແລະ ຈັດໜ້າໂດຍ:**

ທ່ານ ຕຸລາໄຊ ພັນທະວົງ

ກົມນະໂຍບາຍການຄ້າຕ່າງປະເທດ, ກະຊວງອຸດສາຫະກຳ ແລະ ການຄ້າ

ຖະໜົນໂພນໄຊ, ຕູ້ ປ.ນ 4107, ນະຄອນຫຼວງວຽງຈັນ, ສປປ ລາວ

ໂທ: (+856) 21 415931    ແຟັກ: (+856) 21 450066

ເວັບໄຊ້: www.moic.gov.la/ftpd

ອີເມລ໌: bilateral@laopdr.com

# ຄຳເຫັນຂອງ ທ່ານ
# ຫົວໜ້າກົມນະໂຍບາຍການຄ້າຕ່າງປະເທດ

ລັດຖະບານແຫ່ງ ສປປ ລາວ ໄດ້ວາງຄາດໝາຍສູ້ຊົນໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດຄັ້ງທີ VI ເພື່ອຮັບປະກັນໃຫ້ຍອດລວມຜະລິດຕະພັນພາຍໃນບັນລຸໄດ້ຢ່າງໜ້ອຍ 7.5% ຕໍ່ ປີ ແລະ ນຳພາ ສປປ ລາວ ຫຼຸດພົ້ນອອກຈາກຄວາມດ້ອຍພັດທະນາໃນປີ 2020. ເພື່ອໃຫ້ບັນລຸຄາດໝາຍດັ່ງກ່າວ, ລັດຖະບານໄດ້ນຳໃຊ້ຍຸດທະສາດ 3 ງ່າມ ທີ່ແນໃສ່ຮັກສາສະຖຽນລະພາບທາງການເມືອງ ແລະ ຄວາມສະຫງົບທາງສັງຄົມຢ່າງໜັກແໜ້ນ; ຮັບປະກັນການຂະຫຍາຍຕົວຂອງເສດຖະກິດແຫ່ງຊາດໃຫ້ມີຄວາມຕໍ່ເນື່ອງ ແລະ ໝັ້ນທ່ຽງ; ແລະ ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນໃຫ້ນັບມື້ນັບດີຂຶ້ນ. ລັດຖະບານເຂົ້າໃຈຢ່າງຈະແຈ້ງວ່າເພື່ອສ້າງພື້ນຖານເສດຖະກິດແຫ່ງຊາດ ໃຫ້ມີຄວາມໜັກແໜ້ນ, ແມ່ນຈຳເປັນຕ້ອງຮັບປະກັນໃຫ້ໂຄງປະກອບເສດຖະກິດມີຄວາມສົມສ່ວນຫຼາຍຂຶ້ນ ແລະ ມີຄວາມຫຼາກຫຼາຍໆກວ່າເກົ່າ ລະຫວ່າງສາມພາກສ່ວນເສດຖະກິດຕົ້ນຕໍເຊັ່ນ: ກະສິກຳ, ອຸດສາຫະກຳ, ແລະ ການບໍລິການ.

ໃນຊຸມປີຜ່ານມາ, ສປປ ລາວ ໄດ້ມີບາດກ້າວອັນພົ້ນເດັ່ນໃນການເຊື່ອມຕົວເຂົ້າໃນຕະຫຼາດລະດັບພາກພື້ນ ແລະ ສາກົນ, ຊຶ່ງໄດ້ປະກອບສ່ວນໃຫ້ຂະແໜງການທີ່ສຳຄັນຂອງເສດຖະກິດແຫ່ງຊາດມີການຂະຫຍາຍຕົວ. ນອກນີ້, ຍັງຕ້ອງເຂົ້າໃຈວ່າພາກລັດ ແລະ ເອກະຊົນ ແມ່ນມີບົດບາດອັນສຳຄັນໃນການເສີມສ້າງເສດຖະກິດໃຫ້ໝັ້ນທ່ຽງ ຊຶ່ງ ສປປ ລາວ ໄດ້ມີບົດຮຽນມາຕະຫຼອດໄລຍະ 10 ກວ່າປີ ແລະ ເພື່ອກ້າວໄປສູ່ການສ້າງພື້ນຖານອັນຈຳເປັນໃນການຫັນເສດຖະກິດຂອງ ສປປ ລາວ ເປັນອຸດສາຫະກຳ ແລະ ທັນສະໄໝເທື່ອລະກ້າວ.

ສປປ ລາວ ໄດ້ເລັ່ງເຫັນຜົນດີຂອງເສດຖະກິດຕະຫຼາດ ຈຶ່ງໄດ້ປັບປຸງທຸກຂອດເສດຖະກິດ ແລະ ຫັນໄປສູ່ກົນໄກເສດຖະກິດໃໝ່ (NEM) ໃນປີ 1986. ນັບແຕ່ນັ້ນມາ, ສປປ ລາວ ກໍ່ໄດ້ຫັນໄປສູ່ເສດຖະກິດຕະຫຼາດອັນທັນສະໄໝຢ່າງໝັ້ນທ່ຽງ ແລະ ໜັກແໜ້ນ. ການປະຕິຮູບລະບົບຕະຫຼາດທີ່ສຳຄັນຂອງ ສປປ ລາວ ແມ່ນຢູ່ບົນພື້ນຖານຄວາມພະຍາຍາມເຂົ້າເປັນສະມາຊິກອາຊຽນ ແລະ ອົງການການຄ້າໂລກ. ເຖິງແມ່ນວ່າການເປີດເສລີທາງການຄ້າ ແລະ ການເຊື່ອມໂຍງເສດຖະກິດ ຈະເຮັດໃຫ້ຕະຫຼາດມີປະສິດທິພາບຫຼາຍຂຶ້ນ, ແຕ່ກໍບໍ່ສາມາດປະຕິເສດການແຂ່ງຂັນຈາກພາຍນອກທີ່ເພີ່ມຂຶ້ນ ຊຶ່ງສ້າງຜົນກະທົບດ້ານລົບຕໍ່ຜູ້ຜະລິດພາຍໃນ ແລະ ເຮັດໃຫ້ມີກຸ່ມຄົນທີ່ໄດ້ ແລະເສຍຜົນປະໂຫຍດ.ຈາກຫຼາຍຜົນການຄົ້ນຄວ້າໄດ້ຊີ້ໃຫ້ເຫັນວ່າ ການເປີດເສລີທາງການຄ້າທີ່ໄດ້ຮັບການຜັນຂະຫຍາຍ ແລະ ສະໜັບສະໜູນຈາກການປະຕິຮູບເສດຖະກິດ ແລະ ລະບຽບການ ຈະຊ່ວຍໃຫ້ບັນດາປະເທດ ຄືກັບ ສປປ ລາວ ມີກາລະໂອກາດໃນການຊອກ ແລະ ຂະຫຍາຍຕະຫຼາດຕ່າງປະເທດຂອງຕົນ. ດັ່ງນັ້ນ, ໃນເງື່ອນໄຂທີ່ແທດເໝາະ ການເປີດເສລີທາງການຄ້າສາມາດຮັບປະກັນຕະຫຼາດໃຫ້ແກ່ຜູ້ຜະລິດຂອງລາວ, ຊ່ວຍສ້າງລາຍຮັບ, ສ້າງວຽກເຮັດງານທຳໃຫ້ແກ່ປະຊາຊົນ, ແລະ ຊ່ວຍຫຼຸດຜ່ອນຄວາມທຸກຍາກໃນທີ່ສຸດ.

ສປປ ລາວ ໄດ້ເປັນພາຄີໃນຫຼາຍສັນຍາການຄ້າທັງຂອບສອງຝ່າຍ ແລະ ພາກພື້ນ, ຊຶ່ງເຮັດໃຫ້ໄດ້ຮັບບູລິມະສິດເຂົ້າສູ່ຕະຫຼາດຂອງປະເທດທີ່ພັດທະນາແລ້ວ ແລະ ປະເທດທີ່ກຳລັງພັດທະນາ. ໃນຖານະປະເທດດ້ອຍພັດທະນາ, ສປປ ລາວ ໄດ້ຮັບສິດທິພິເສດໃນການເຂົ້າສູ່ຕະຫຼາດແບບຝ່າຍດຽວພາຍໃຕ້ລະບົບສິດທິພິເສດທາງການຄ້າແບບທົ່ວໄປ (GSP).

ເຖິງຢ່າງໃດກໍຕາມ, ຜ່ານການປະເມີນອັດຕາການນຳໃຊ້ສິດທິພິເສດເຂົ້າສູ່ຕະຫຼາດດັ່ງກ່າວນັ້ນ, ພວກເຮົາສັງເກດເຫັນວ່າ ສປປ ລາວ ຍັງບໍ່ທັນໄດ້ຮັບຜົນປະໂຫຍດຈາກສິດທິພິເສດເຫຼົ່ານີ້ຢ່າງເຕັມສ່ວນເທື່ອ, ຊຶ່ງມີຫຼາຍສາເຫດໃນນັ້ນຜ່ານການປຶກສາຫາລືກັບພາກເອກະຊົນ ແລະ ຂະແໜງການອື່ນໆກ່ຽວຂ້ອງ ເຫັນວ່າສາເຫດຕົ້ນຕໍແມ່ນບັນຫາການຂາດ ຂໍ້ມູນຂ່າວສານ ກ່ຽວກັບ

ສິດທິພິເສດທີ່ ສປປ ລາວ ໄດ້ຮັບ, ສັນຍາການຄ້າໃນຂອບສອງຝ່າຍ ແລະ ພາກພື້ນ, ລະບຽບແຫຼ່ງກຳເນີດສິນຄ້າ, ຂໍ້ກີດກັ້ນທາງການຄ້າ ໆລໆ. ນັ້ນແມ່ນໜຶ່ງໃນຫຼາຍສາເຫດຕົ້ນຕໍທີ່ເຮັດໃຫ້ຜູ້ຜະລິດ ແລະ ຜູ້ສົ່ງອອກສູນເສຍໂອກາດໃນຕະຫຼາດເຫຼົ່ານັ້ນ.

ເພື່ອເສີມສ້າງຄວາມຮັບຮູ້ ກ່ຽວກັບ ໂອກາດການສົ່ງອອກຂອງ ສປປ ລາວ, ກົມນະໂຍບາຍການຄ້າຕ່າງປະເທດ, ກະຊວງອຸດສາຫະກຳ ແລະ ການຄ້າ ໄດ້ຮວບຮວມຂໍ້ມູນກ່ຽວກັບສິດທິພິເສດທາງການຄ້າ ແລະ ບູລິມະສິດເຂົ້າສູ່ຕະຫຼາດພາຍໃຕ້ສັນຍາການຄ້າເສລີລະຫວ່າງ ສປປ ລາວ ແລະ ປະເທດຄູ່ຄ້າ. ຂໍ້ມູນດັ່ງກ່າວໄດ້ຖືກຮວບຮວມໄວ້ໃນປື້ມຄູ່ມືເຫຼັ້ມນີ້ ແລະ ແຜ່ນຊີດີ ທີ່ບັນຈຸຕາຕະລາງຫຼຸດຜ່ອນອັດຕາພາສີນຳເຂົ້າຕ່າງປະເທດຂອງສິນຄ້າຈາກ ສປປ ລາວ ໃນຂອບຕ່າງໆ, ຊຶ່ງພວກຂ້າພະເຈົ້າຫວັງຢ່າງຍິ່ງວ່າສິ່ງເຫຼົ່ານີ້ຈະເປັນຜົນປະໂຫຍດສຳລັບບຸກຄົນທົ່ວໄປ ແລະ ພາກເອກະຊົນ.

ຂ້າພະເຈົ້າຕາງໜ້າໃຫ້ກົມນະໂຍບາຍການຄ້າຕ່າງປະເທດ ຂໍສະແດງຄວາມຂອບໃຈຢ່າງສູງມາຍັງໜ່ວຍງານຈັດຕັ້ງປະຕິບັດໂຄງການ (National Implementation Unit - NIU) ທີ່ໄດ້ໃຫ້ການຊ່ວຍເຫຼືອງົບປະມານໃນການຈັດພິມ. ປື້ມຄູ່ມືເຫຼັ້ມນີ້ແມ່ນໄດ້ຖືກຈັດພິມເປັນຄັ້ງທຳອິດ. ພວກຂ້າພະເຈົ້າຍິນດີຮັບເອົາຄຳຕຳນິຕິຊົມ ແລະ ຄຳສະເໜີຈາກບັນດາທ່ານຜູ້ອ່ານ ເພື່ອຈະນຳໄປປັບປຸງເນື້ອໃນການຈັດພິມຄັ້ງໜ້າໃຫ້ສົມບູນຍິ່ງຂຶ້ນ. ທ້າຍນີ້, ຂ້າພະເຈົ້າຫວັງຢ່າງຍິ່ງວ່າ ປື້ມຄູ່ມືເຫຼັ້ມນີ້ຈະເປັນແຫຼ່ງຂໍ້ມູນອັນສຳຄັນໃຫ້ແກ່ຜູ້ອ່ານທັງຫຼາຍ.

**ບຸນສົມ ພົມມະວິຫານ**

ຫົວໜ້າກົມນະໂຍບາຍການຄ້າຕ່າງປະເທດ,

ກະຊວງອຸດສາຫະກຳ ແລະ ການຄ້າ

# ສາລະບານ


**ຄຳເຫັນຂອງ ທ່ານ ຫົວໜ້າກົມນະໂຍບາຍການຄ້າຕ່າງປະເທດ .................. i**

**ອັກສອນຫຍໍ້ ........................................................................... viii**

**ພາບລວມຂອງນະໂຍບາຍການຄ້າຕ່າງປະເທດຂອງ ສປປ ລາວ ............... 1**

**ໂອກາດເຂົ້າສູ່ຕະຫຼາດຕ່າງປະເທດຂອງ ສປປ ລາວ ................................ 7**

**ອົດສະຕາລີ ........................................................................... 12**

ລະບົບສິດທິພິເສດທາງດ້ານການຄ້າຂອງອົດສະຕາລີ (ASTP) ........................................................................ 12

ພາຍໃຕ້ຂອບສັນຍາການຄ້າເສລີ ລະຫວ່າງ ອາຊຽນ-ອົດສະຕາລີ-ນິວຊີແລນ (ACERFTA).......................................... 13

**ບຣູໄນ, ອິນໂດເນເຊຍ, ຟີລິບປິນ .............................................. 14**

ບຣູໄນ ............................................................................... 14

ອິນໂດເນເຊຍ........................................................................ 14

ຟີລິບປິນ ............................................................................ 15

**ການາດາ .............................................................................. 16**

ລະບົບສິດທິພິເສດທາງດ້ານການຄ້າແກ່ປະເທດດ້ອຍພັດທະນາຂອງການາດາ (LDCT).............................................. 16

**ສະຫະພາບເອີຣົບ ................................................................. 18**

ລະບົບທຸກສິ່ງທຸກຢ່າງຍົກເວັ້ນອາວຸດ (EBA)........................... 19

**ອິນເດຍ .............................................................................. 21**

ລະບົບສິດທິພິເສດທາງດ້ານການຄ້າຂອງອິນເດຍສຳລັບປະ
ເທດດ້ອຍພັດທະນາ (DFTP) .......................................... 21

ຂອບສັນຍາການຄ້າອາຊີ-ປາຊີຟິກ (APTA)......................... 22

ຂອບສັນຍາການຄ້າເສລີອາຊຽນ-ອິນເດຍ (AIFTA) ................ 23

**ຍີ່ປຸ່ນ .............................................................................. 24**

ລະບົບອັດຕາພາສີພິເສດແບບທົ່ວໄປສຳລັບປະເທດດ້ອຍພັດ
ທະນາ (GPT)............................................................... 24

ສັນຍາຄູ່ຮ່ວມມືຮອບດ້ານທາງເສດຖະກິດລະຫວ່າງອາຊຽນ-
ຍີ່ປຸ່ນ (AJCEP) ............................................................ 25

**ປະເທດໄທ...................................................................... 26**

ລະບົບສິດທິພິເສດເພື່ອການເຊື່ອມໂຍງເຂົ້າອາຊຽນ (AISP)....... 26

ຂອບສັນຍາການຄ້າເສລີອາຊຽນ (AFTA/CEPT) .................. 27

**ມາເລເຊຍ........................................................................ 28**

ລະບົບສິດທິພິເສດເພື່ອການເຊື່ອມໂຍງເຂົ້າອາຊຽນ (AISP)....... 28

ພາຍໃຕ້ຂອບສັນຍາການຄ້າເສລີອາຊຽນ (AFTA/CEPT)......... 28

**ນອກແວ ......................................................................... 29**

ລະບົບສິດທິພິເສດແບບທົ່ວໄປສຳລັບປະເທດດ້ອຍພັດທະນາ ..... 29

**ສາທາລະນະລັດ ປະຊາຊົນຈີນ............................................. 30**

ຂອບສັນຍາການຄ້າເສລີອາຊຽນ-ຈີນ (ACFTA)..................... 30

ຂອບສັນຍາການຄ້າອາຊີ-ປາຊີຟິກ (APTA)......................... 33

ການຄ້າຊາຍແດນ .......................................................... 34

ສິດທິພິເສດທາງການຄ້າແກ່ປະເທດດ້ອຍພັດທະນາຂອງ
ຈີນ-ໄຕ້ຫວັນ ........ 34

**ສາທາລະນະລັດ ເກົາຫລີ ........ 35**

ລະບົບສິດທິພິເສດທີ່ປະເທດກຳລັງພັດທະນາໃຫ້ແກ່ປະເທດ
ດ້ອຍພັດທະນາ ........ 35

ຂອບສັນຍາການຄ້າເສລີອາຊຽນ-ສ.ເກົາຫລີ (AKFTA) ........ 35

ຂອບສັນຍາການຄ້າອາຊີ-ປາຊີຟິກ (APTA) ........ 36

**ສະຫະພັນລັດເຊຍ ........ 38**

ລະບົບສິດທິພິເສດທາງການຄ້າແບບທົ່ວໄປໃຫ້ແກ່ປະເທດ
ດ້ອຍພັດທະນາ (GSP) ........ 38

**ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ........ 40**

ຂໍ້ຕົກລົງໃນການໃຫ້ບູລິມະສິດອັດຕາພາສີນຳເຂົ້າ ລະຫວ່າງ
ສປປ ລາວ ແລະ ສສ ຫວຽດນາມ ........ 40

**ສະວິດເຊີແລນ ........ 43**

ລະບົບສິດທິພິເສດທາງການຄ້າແບບທົ່ວໄປໃຫ້ແກ່ປະເທດ
ດ້ອຍພັດທະນາ (GSP) ........ 43

**ຕວກກີ ........ 45**

ລະບົບສິດທິພິເສດທາງການຄ້າແບບທົ່ວໄປໃຫ້ແກ່ປະເທດ
ດ້ອຍພັດທະນາ (GSP) ........ 45

**ສະຫະລັດອາເມລິກາ ........ 46**

ສັນຍາວ່າດ້ວຍສາຍພົວພັນດ້ານການຄ້າລະຫວ່າງ ສປປ ລາວ
ແລະ ອາເມລິກາ ........ 47

ຂັ້ນຕອນທີ່ຕ້ອງພິຈາລະນາກ່ອນການສົ່ງອອກ ...................................... 49

ແບບຟອມທີ່ນຳໃຊ້ໃນການສົ່ງອອກສິນຄ້າໄປແຕ່ລະປະເທດ .................. 53

ແຫຼ່ງຂໍ້ມູນເພີ່ມເຕີມ ............................................................... 57

ຕາຕະລາງບັນຊີຫຼຸດຜ່ອນອັດຕາພາສີພາຍໃຕ້ຂອບຕ່າງໆທີ່ບັນຈຸໃນ
ແຜ່ນຊີດີ ................................................................................. 63

# ອັກສອນຫຍໍ້

| | |
|---|---|
| ACFTA | ເຂດການຄ້າເສລີອາຊຽນ-ຈີນ |
| AFTA | ເຂດການຄ້າເສລີອາຊຽນ |
| AIFTA | ເຂດການຄ້າເສລີອາຊຽນ-ອິນເດຍ |
| AISP | ລະບົບສິດທິພິເສດເພື່ອການເຊື່ອມໂຍງເຂົ້າອາຊຽນ |
| AJFTA | ເຂດການຄ້າເສລີອາຊຽນ-ຍີ່ປຸ່ນ |
| AKFTA | ເຂດການຄ້າເສລີອາຊຽນ-ເກົາຫລີ |
| APTA | ສັນຍາການຄ້າອາຊີ-ປາຊີຟິກ |
| ASEAN | ສະມາຄົມປະຊາຊາດອາຊີຕາເວັນອອກສ່ຽງໃຕ້ |
| BTA | ສັນຍາການຄ້າສອງຝ່າຍ |
| CEPT | ລະບົບອັດຕາພາສີນຳເຂົ້າບູລິມະສິດທີ່ຜົນບັງຄັບໃຊ້ຮ່ວມກັນ |
| DFQF | ລະບົບຍົກເວັ້ນພາສີນຳເຂົ້າ ແລະ ປະລິມານນຳເຂົ້າ |
| DFTP | ລະບົບສິດທິພິເສດທາງພາສີຂອງອິນເດຍ |
| EBA | ລະບົບທຸກສິ່ງທຸກຢ່າງ, ຍົກເວັ້ນອາວຸດ |
| EHP | ໂຄງການສ້າງຜົນປະໂຫຍດເສດຖະກິດໃນເບື້ອງຕົ້ນ |
| EU | ສະຫະພາບເອີຣົບ |
| FTA | ສັນຍາການຄ້າເສລີ |
| GSP | ລະບົບສິດທິພິເສດທາງການຄ້າແບບທົ່ວໄປ |
| LDCs | ປະເທດດ້ອຍພັດທະນາ |

| | |
|---|---|
| LDCT | ລະບົບສິດທິພິເສດທາງດ້ານການຄ້າແກ່ປະເທດດ້ອຍພັດທະນາຂອງການາດາ |
| SPT | ສິດທິພິເສດທາງການຄ້າຈາກຈີນພາຍໃຕ້ລະບົບອັດຕາພາສີພິເສດ ແລະ ແຕກຕ່າງ |

# ພາບລວມຂອງນະໂຍບາຍການຄ້າຕ່າງ

# ປະເທດຂອງ ສປປ ລາວ







ສປປ ລາວ ໄດ້ຈັດຕັ້ງປະຕິບັດລະບົບເປີດກວ້າງທາງການຄ້າຢ່າງຕັ້ງໜ້າ ແລະ ໄດ້ປັບປຸງນະໂຍບາຍການຄ້າຕ່າງປະເທດຂອງຕົນເພື່ອຍົກສູງຄວາມໂປ່ງໃສ ແລະ ຮັບປະກັນສະພາບເວດລ້ອມທາງການຄ້າ. ໃນຂະນະດຽວກັນ, ລັດຖະບານແຫ່ງ ສປປ ລາວ ໄດ້ສືບຕໍ່ຂະຫຍາຍສາຍພົວພັນທາງການຄ້າກັບບັນດາປະເທດໃນທົ່ວໂລກ.

ມາຮອດປະຈຸບັນ, ສປປ ລາວ ໄດ້ສ້າງສາຍພົວພັນທາງການຄ້າກັບກວ່າ 50 ປະເທດໃນໂລກ, ຊຶ່ງປະເທດຄູ່ຄ້າຫຼັກແມ່ນ ໄທ, ຫວຽດນາມ, ອິດສະຕາລີ, ສ.ເກົາຫລີ, ມາເລເຊຍ, ອັງກິດ, ຝຣັ່ງ, ເຢຍລະມັນ, ຍີ່ປຸ່ນ, ແລະ ອາເມລິກາ. ນອກຈາກນີ້, ສປປ ລາວ ໄດ້ເຊັນສັນຍາການຄ້າກັບ 18 ປະເທດ ຄື: ອາກຊັງຕິນ, ເບລາຣຸດ, ບຸນກາລີ, ກຳປູເຈຍ, ຈີນ, ອິນໂດເນເຊຍ, ອິນເດຍ, ສ.ເກົາຫລີ, ກູເວດ, ມາເລເຊຍ, ມົງໂກລີ, ມຽນມ່າ, ຟີລິປິນ, ຣັດເຊຍ, ໄທ, ຕວກກີ, ອາເມລິກາ, ແລະ ຫວຽດນາມ.

ສິນຄ້າສົ່ງອອກຫຼັກຂອງປະເທດແມ່ນ ກາເຟ, ຜະລິດຕະພັນກະສິກຳ ແລະ ສັດລ້ຽງ, ເຄື່ອງປ່າຂອງດົງ, ໄຟຟ້າ, ແຮ່ທາດ, ເຄື່ອງຕັດຫຍິບ, ແລະ ຜະລິດຕະພັນໄມ້ (ເບິ່ງຕາຕະລາງ 1). ມູນຄ່າການສົ່ງອອກເພີ່ມຂຶ້ນຫຼາຍພໍສົມຄວນໃນປີຜ່ານໆມາ; ຊຶ່ງເຮັດໃຫ້ດຸນການຄ້າໄດ້ຮັບການແກ້ໄຂເພື່ອລະກ້າວ. ໃນຖານະປະເທດທີ່ມີລາຍຮັບຕ່ຳ, ການນຳເຂົ້າຂອງ ສປປ ລາວ ແມ່ນເພື່ອຮັບໃຊ້ໃຫ້ແກ່ການພັດທະນາ ແລະ ຕອບສະໜອງຊີວິດເປັນຢູ່ປະຈຳວັນຂອງປະຊາຊົນເຊັ່ນ: ຜະລິດຕະພັນອາຫານ, ນ້ຳມັນເຊື້ອໄຟ, ພາຫະນະ/ກົນຈັກໜັກ, ສິນຄ້າເພື່ອການລົງທຶນ, ສິນຄ້າອຸປະໂພກ/ບໍລິໂພກ, ວັດຖຸດິບ ແລະ ສິນຄ້າເຄິ່ງສຳເລັດຮູບ.

**ຕາຕະລາງ 1:** ການສົ່ງອອກ ແລະ ນຳເຂົ້າຂອງ ສປປ ລາວ (2004-2007)

ຫົວໜ່ວຍ: ລ້ານໂດລາສະຫະລັດ

| ລ/ດ | ລາຍການ | 2004 | 2005 | 2006 | 2007 |
|---|---|---|---|---|---|
| | ***ມູນຄ່າສົ່ງອອກທັງໝົດ:*** | *500* | *648* | *1,029* | *1,053* |
| 1. | ກາເຟ | 15 | 8 | 13 | 31 |
| 2. | ຜະລິດຕະພັນກະສິກຳ ແລະ | 18 | 30 | 45 | 46 |
| 3. | ສັດລ້ຽງ | 4 | 4 | 7 | 3 |
| | ເຄື່ອງປ່າຂອງດົງ | | | | |
| 4. | ໄຟຟ້າ | 91 | 105 | 104 | 99 |
| 5. | ບໍ່ແຮ່ | 58 | 203 | 527 | 536 |
| 6. | ຕັດຫຍິບ | 155 | 138 | 126 | 153 |
| 7. | ຜະລິດຕະພັນໄມ້ | 145 | 137 | 140 | 138 |
| 8. | ອື່ນໆ | 16 | 21 | 67 | 48 |
| | ***ມູນຄ່ານຳເຂົ້າທັງໝົດ:*** | *958* | *1,059* | *1,397* | *1,966* |
| 1. | ອາຫານ | 24 | 28 | 40 | 55 |
| 2. | ນ້ຳມັນເຊື້ອໄຟ | 95 | 175 | 201 | 250 |
| 3. | ພາຫະນະ/ກົນຈັກໜັກ | 232 | 358 | 431 | 897 |
| 4. | ສິນຄ້າເພື່ອການລົງທຶນ | 287 | 273 | 344 | 308 |
| 5. | ສິນຄ້າອຸປະໂພກ/ບໍລິໂພກ | 157 | 68.3 | 223 | 251 |
| 6. | ວັດຖຸດິບ ແລະ ສິນຄ້າເຄິ່ງ ສຳເລັດຮູບ | 163 | 157 | 157 | 208 |
| **ລວມທັງໝົດ** | | **1,458** | **1,707** | **2,426** | **3,022** |

ແຫຼ່ງຂໍ້ມູນ: ຕົວຊີ້ວັດເສດຖະກິດຂອງ ສປປ ລາວ, ທະນາຄານໂລກ, ເມສາ 2008

ໃນລະດັບພາກພື້ນ, ສປປ ລາວ ໄດ້ເຂົ້າເປັນພາຄີຂອງສັນຍາການຄ້າອາຊີ-ປາຊີຟິກ (APTA) ໃນປີ 1975, ສະມາຄົມປະຊາຊາດອາຊີຕາເວັນອອກສ່ຽງໃຕ້ (ASEAN) ໃນປີ 1997 ແລະ ເຂົ້າຮ່ວມເຂດການຄ້າເສລີອາຊຽນໃນປີ 1998. ນອກຈາກນີ້, ສປປ ລາວ ຍັງໄດ້ພະຍາຍາມເຊື່ອມໂຍງກັບເວທີສາກົນດ້ວຍການສະໝັກເຂົ້າເປັນສະມາຊິກຂອງອົງການການຄ້າໂລກ ແລະ ປະຈຸບັນ ສປປ ລາວ ກຳລັງຢູ່ໃນໄລຍະການເຈລະຈາເຂົ້າເປັນສະມາຊິກ.

# ໂອກາດເຂົ້າສູ່ຕະຫຼາດຕ່າງປະເທດ
# ຂອງ ສປປ ລາວ

  

ສປປ ລາວ ມີໂອກາດເຂົ້າສູ່ຕະຫຼາດຕ່າງປະເທດພາຍໃຕ້ລະບົບສິດທິເສດທາງການຄ້າແບບຝ່າຍດຽວ ແລະ ແບບຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດຈາກປະເທດທີ່ພັດທະນາແລ້ວ ແລະ ກຳລັງພັດທະນາຈຳນວນ 47 ປະເທດ.[1] ໃນຖານະປະເທດດ້ອຍພັດທະນາ, ສປປ ລາວ ໄດ້ຮັບສິດທິເສດທາງການຄ້າແບບຝ່າຍດຽວພາຍໃຕ້ລະບົບສິດທິພິເສດທາງການຄ້າແບບທົ່ວໄປ (GSP) ຈາກ 35 ປະເທດ ລວມມີ ສະຫະພາບເອີຣົບ[2], ອົດສະຕາລີ, ສາທາລະນະລັດເບລາຣຸສ, ການາດາ, ຍີ່ປຸ່ນ, ນິວຊີແລນ, ນອກແວ, ສະຫະພັນລັດເຊຍ, ສະວິດເຊີແລນ, ແລະ ຕວກກີ. ສຳລັບອີຢູແມ່ນໄດ້ເລີ່ມຕົ້ນໃຫ້ສິດທິພິເສດໃນການເຂົ້າສູ່ຕະຫຼາດແກ່ປະເທດດ້ອຍພັດທະນາ ໃນຮູບແບບການຍົກເວັ້ນອັດຕາພາສີ ແລະ ບໍ່ກຳນົດຈຳນວນນຳເຂົ້າ ພາຍໃຕ້ລະບົບທຸກສິ່ງທຸກຢ່າງຍົກເວັ້ນອາວຸດ (EBA) ນັບແຕ່ປີ 2002 ເປັນຕົ້ນມາ. ນອກນັ້ນ, ສປປ ລາວ ຍັງໄດ້ຮັບສິດທິພິເສດດ້ານພາສີຈາກບັນດາປະເທດທີ່ມີເສດຖະກິດໃຫຍ່ເຊັ່ນ: ຈີນ, ສ.ເກົາຫລີ, ຈີນ-ໄຕ້ຫວັນ, ແລະ ອິນເດຍ. ລະບົບສິດທິພິເສດເຫຼົ່ານີ້ ແມ່ນມີຈຸດປະສົງແນໃສ່ເພື່ອ ຊ່ວຍປະເທດດ້ອຍພັດທະນາໃນການຫຼຸດຜ່ອນຄວາມທຸກຈົນດ້ວຍຮູບການສົ່ງເສີມການສົ່ງອອກ.

ນອກຈາກນີ້, ສປປ ລາວ ຍັງໄດ້ຮັບສິດທິພິເສດທາງການຄ້າແບບຝ່າຍດຽວຈາກບັນດາປະເທດສະມາຊິກອາຊຽນ[3]ເກົ່າເຊັ່ນ: ໄທ, ມາເລເຊຍ, ຟີລິບປິນ, ແລະ ບຣູໄນ ດາຣູສຊະລາມ ພາຍໃຕ້ລະບົບສິດທິພິເສດເພື່ອການເຊື່ອມ

---

[1] ສະຫະພາບເອີຣົບ (EU) 27 ປະເທດ, ອົດສະຕາລີ, ການາດາ, ຍີ່ປຸ່ນ, ນິວຊີແລນ, ນອກແວ, ສະວິດເຊີ ແລນ, ສາທາລະນະລັດ ເບລາຣຸສ, ສະຫະພັນລັດເຊຍ, ຕຸກກີ, ສາທາລະນະລັດເກົາຫຼີ, ໄທ, ມາເລເຊຍ, ຟີລິບປິນ, ຈີນ, ຫວຽດນາມ, ອິນເດຍ, ສີລັງກາ, ແລະ ຈີນໄຕ້ຫວັນ

[2] ສະມາຊິກຂອງສະຫະພາບເອີຣົບ (EU) 27 ປະເທດມີຄື: ອົສເຕຼັຍ, ແບລຢຽມ, ບຸນກາຣີ, ໄຊປຣັສ, ສາທາລະນະລັດເຊັກ, ເດັນມາກ, ແອສໂຕເນັຍ, ຟິນແລນ, ຝລັ່ງ, ເຢັຍລະມັນ, ເກຼັກ, ຮັງກາຣີ, ໄອແລນ, ອີຕາລີ, ລັຕເວັຍ, ລິຕູເອເນັຍ, ລຸກເຊັມເບີກ, ມາລຕາ, ເນເດີແລນ, ໂປແລນ, ປອກຕູການ, ຣູມາເນັຍ, ສະໂລວາເກັຍ, ສະໂລເວເນັຍ, ສະເປນ, ສະວີເດັນ, ແລະ ອັງກິດ.

[3] ສະມາຊິກອາຊຽນມີທັງໝົດ 10 ປະເທດຄື: ບຣູໄນ ດາຣູສຊະລາມ, ກຳປູເຈຍ, ອິນໂດເນເຊຍ, ມາເລເຊຍ, ມຽນມາ, ສປປ ລາວ, ຟີລິບປິນ, ສິງກະໂປ, ໄທ, ຫວຽດນາມ

ໂຍງເຂົ້າອາຊຽນ (AISP), ຊຶ່ງໄດ້ຖືກຮັບຮອງໃນວັນທີ 01 ມັງກອນ 2002 ເພື່ອຈັດຕັ້ງປະຕິບັດຕາມຂໍ້ລິເລີ່ມການເຊື່ອມໂຍງອາຊຽນ (IAI) ເພື່ອຫຼຸດຜ່ອນຄວາມແຕກໂຕນຂອງການພັດທະນາລະຫວ່າງປະເທດສະມາຊິກອາຊຽນເກົ່າ ແລະ ໃໝ່. ໃນຂອບນີ້, ປະເທດສະມາຊິກອາຊຽນເກົ່າຕ້ອງໃຫ້ສິດທິພິເສດທາງພາສີໃຫ້ແກ່ປະເທດ CLMV (ກຳປູເຈຍ, ສປປ ລາວ, ມຽນມາ, ແລະ ຫວຽດນາມ) ບົນພື້ນຖານສອງຝ່າຍ ແລະ ຄວາມສະມັກໃຈ. ສິນຄ້າທີ່ນອນໃນຂອບນີ້ມີທັງໝົດ 1,117 ລາຍການ. ໃນນີ້, ມີພຽງມາເລເຊຍ, ຟີລິບປິນ ແລະ ໄທ ທີ່ອອກລະບຽບເພື່ອຈັດຕັ້ງປະຕິບັດ AISP. ນອກຈາກນັ້ນ, ໃນຖານະປະເທດສະມາຊິກທີ່ເປັນປະເທດດ້ອຍພັດທະນາໃນຂອບສັນຍາການຄ້າອາຊີ-ປາຊີຟິກ ຫຼື APTA, ສປປ ລາວ ກໍ່ໄດ້ຮັບສິດທິພິເສດທາງພາສີແບບຝ່າຍດຽວຈາກຈີນ, ສ.ເກົາຫລີ, ອິນເດຍ, ແລະ ສີລັງກາ.

ສຳລັບການໃຫ້ສິດທິພິເສດທາງພາສີ ແບບຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ, ສປປ ລາວ ສາມາດສົ່ງອອກໄປບັນດາປະເທດສະມາຊິກອາຊຽນພາຍໃຕ້ສັນຍາເຂດການຄ້າເສລີອາຊຽນ (AFTA/CEPT). ໃນຂອບນີ້, ອັດຕາພາສີນຳເຂົ້າຂອງແຕ່ລະປະເທດ ແມ່ນໄດ້ຖືກຫຼຸດຜ່ອນລົງເຖິງ 0% ຫາ 5%. ຜົນຂອງການເຈລະຈາເຂດການຄ້າເສລີກັບປະເທດອາຊຽນ-ຄູ່ເຈລະຈາ: ຈີນ, ສ.ເກົາຫລີ, ຍີ່ປຸ່ນ, ອິນເດຍ, ແລະ ອົດສະຕາລີ-ນິວຊີແລນ, ກໍ່ໄດ້ວາງຄາດໝາຍຫຼຸດຜ່ອນອັດຕາພາສີນຳເຂົ້າຂອງຕົນບົນພື້ນຖານສອງຝ່າຍໃຫ້ແກ່ ສປປ ລາວ ເຊັ່ນດຽວກັນ. ຄຽງຄູ່ກັນນັ້ນ, ພາຍໃຕ້ຂອບ APTA, ສປປ ລາວ ກໍ່ຍັງສາມາດສົ່ງອອກໄປຈີນ, ສ.ເກົາຫລີ, ອິນເດຍ, ສີລັງກາ, ແລະ ບັງກະລາເດັດໃນອັດຕາພາສີນຳເຂົ້າທີ່ຕ່ຳ.

ນອກຈາກນັ້ນ, ສປປ ລາວ ແລະ ສສ ຫວຽດນາມໄດ້ລົງນາມໃນຂໍ້ຕົກລົງກ່ຽວກັບການໃຫ້ບູລິມະສິດທາງການຄ້າ ຊຶ່ງກັນ ແລະ ກັນ ຊຶ່ງເນັ້ນໃສ່ການຫຼຸດຜ່ອນອັດຕາພາສີ ແລະ ຍົກເວັ້ນພາສີໃຫ້ແກ່ສິນຄ້າຫຼາຍລາຍການ, ແຕ່ມີບາງລາຍການສິນຄ້າໄດ້ຖືກຍົກເວັ້ນ.

ນະໂຍບາຍ ແລະ ເງື່ອນໄຂການເຂົ້າສູ່ຕະຫຼາດຂອງແຕ່ລະປະເທດ ແມ່ນແຕກຕ່າງກັນ ຊຶ່ງຈະໄດ້ອະທິບາຍດັ່ງຕໍ່ໄປນີ້:

# ອິດສະຕາລີ

ອິດສະຕາລີເປັນຕະຫຼາດນຳເຂົ້າໃຫຍ່ອັນດັບທີ 15 ຂອງໂລກ, ຊຶ່ງໄດ້ນຳເຂົ້າສິນຄ້າຈາກທົ່ວໂລກເປັນມູນຄ່າປະມານ 69 ຕື້ໂດລາສະຫະລັດ ໃນປີ 2007. ສິນຄ້ານຳເຂົ້າຫຼັກປະກອບມີ: ເຄື່ອງເຟີນີເຈີ, ເຄື່ອງນຸ່ງຫົ່ມ, ເຫຼົ້າ, ຜະລິດຕະພັນໄມ້, ແລະ ກາເຟ. ນັບແຕ່ປີ 1998 ເປັນຕົ້ນມາ, ການຄ້າລະຫວ່າງ ສປປ ລາວ ແລະ ອິດສະຕາລີ ແມ່ນເພີ່ມຂຶ້ນຫຼາຍ ຊຶ່ງເປັນຜົນມາຈາກການສົ່ງອອກຄຳ. ນອກຈາກສິນຄ້າປະເພດຄຳແລ້ວ, ສິນຄ້າສົ່ງອອກຫຼັກຂອງ ສປປ ລາວ ໄປອິດສະຕາລີຍັງມີ: ກາເຟ, ເຟີນີເຈີ, ຜະລິດຕະພັນໄມ້, ໂສ້ງ-ເສື້ອເດັກນ້ອຍ, ແລະ ເຄື່ອງຫັດຖະກຳ. ສປປ ລາວ ມີໂອກາດເຂົ້າສູ່ຕະຫຼາດອິດສະຕາລີດ້ວຍອັດຕາພາສີນຳເຂົ້າທີ່ຕ່ຳພາຍໃຕ້ລະບົບສິດທິພິເສດທາງການຄ້າສຳລັບປະເທດດ້ອຍພັດທະນາ ແລະ ພາຍໃຕ້ສັນຍາເຂດການຄ້າເສລີອາຊຽນ-ອົດສະຕາລີ-ນິວຊີແລນ.

## ລະບົບສິດທິພິເສດທາງດ້ານການຄ້າຂອງອິດສະຕາລີ (ASTP)

ໃນໄລຍະ 30 ປີ ຜ່ານມາ ປະເທດອິດສະຕາລີໄດ້ໃຫ້ສິດທິພິເສດທາງດ້ານການຄ້າແກ່ບັນດາປະເທດກຳລັງພັດທະນາ ແລະ ດ້ອຍພັດທະນາ ພາຍໃຕ້ລະບົບລະບົບສິດທິພິເສດທາງດ້ານການຄ້າຂອງອິດສະຕາລີ "ASTP". ໃນວັນທີ 25 ຕຸລາ 2002 ອິດສະຕາລີໄດ້ປະກາດຍົກເວັ້ນອັດຕາພາສີນຳເຂົ້າ ແລະ ໂກຕານຳເຂົ້າ ສຳລັບສິນຄ້າທຸກປະເພດໃຫ້ແກ່ບັນດາປະເທດດ້ອຍພັດທະນາ, ຊຶ່ງມີຜົນບັງຄັບໃຊ້ແຕ່ວັນທີ 01 ກໍລະກົດ 2003 ເປັນຕົ້ນມາ. ເຖິງຢ່າງໃດກໍ່ຕາມ, ການສົ່ງອອກໃນຂອບນີ້ ຕ້ອງປະຕິບັດຕາມລະບຽບແຫຼ່ງກຳເນີດສິນຄ້າທີ່ເຄັ່ງຄັດ.

## ພາຍໃຕ້ຂອບສັນຍາການຄ້າເສລີ ລະຫວ່າງ ອາຊຽນ-ອົດສະຕາລີ-ນິວຊີແລນ (ACERFTA)

ອາຊຽນ-ອົດສະຕາລີ-ນິວຊີແລນ ໄດ້ສ້າງຂອບການຮ່ວມມືດ້ານເສດຖະກິດໃນຂົງເຂດການຄ້າດ້ານຜະລິດຕະພັນ, ການຄ້າດ້ານການບໍລິການ, ການລົງທຶນ, ຂໍ້ມູນ ແລະ ຂ່າວສານ-ເຕັກໂນໂລຊີ (ICT), ອຸດສາຫະກໍາ (ລວມທັງຂະແໜງ SME), ບໍ່ແຮ່ ແລະ ພະລັງງານ, ມາດຕະຖານຄຸນນະພາບ, ການຂົນສົ່ງຄົມມະນາຄົມ ແລະ ໂທລະຄົມ, ການເງິນ-ທະນາຄານ, ຊັບສິນທາງປັນຍາ, ການທ່ອງທ່ຽວ, ອີ-ອາຊຽນ, ກະສິກໍາ, ສະບຽງອາຫານ ແລະ ການປະມົງ. ການເຈລະຈາສັນຍາການຄ້າເສລີທາງດ້ານການຄ້າດ້ານຜະລິດຕະພັນ, ການຄ້າດ້ານການບໍລິການ ແລະ ການເປີດກວ້າງການລົງທຶນ ໄດ້ສໍາເລັດລົງຢ່າງສົມບູນ ແລະ ໄດ້ຮ່ວມກັນລົງນາມໃນໂອກາດກອງປະຊຸມສຸດຍອດອາຊຽນຄັ້ງທີ 14 ໃນເດືອນ ກຸມພາ 2009 ທີ່ປະເທດໄທ. ຫຼັງຈາກການລົງນາມໃນສັນຍາດັ່ງກ່າວ, ອົດສະຕາລີ-ນິວຊີແລນຈະເລີ່ມຫຼຸດຜ່ອນອັດຕາພາສີນໍາເຂົ້າສໍາລັບສິນຄ້າ 6,124 ລາຍການ (ລະຫັດພາສີ 8 ຕົວເລກ) ໃຫ້ແກ່ອາຊຽນ ຊຶ່ງລວມທັງ ສປປ ລາວ. ນອກນີ້, ອັດຕາພາສີນໍາເຂົ້າຂອງທຸກລາຍການສິນຄ້າຈະຖືກລົບລ້າງໃນປີ 2020. ຄ້າຍຄືກັນກັບຂອບການຄ້າອື່ນໆ, ການສົ່ງອອກໃນຂອບນີ້ຕ້ອງປະຕິບັດຕາມລະບຽບແຫຼ່ງກໍາເນີດສິນຄ້າທີ່ເຄັ່ງຄັດ.

# ບຣູໄນ, ອິນໂດເນເຊຍ, ຟີລິບປິນ

ໃນບັນດາປະເທດສະມາຊິກອາຊຽນ, ໄທ, ຫວຽດນາມ, ແລະ ມາເລເຊັຍ ແມ່ນຕະຫຼາດສົ່ງອອກຫຼັກຂອງ ສປປ ລາວ. ສ່ວນປະເທດສະມາຊິກອາຊຽນອື່ນໆ ເຖິງວ່າຈະມີການພົວພັນຄ້າຂາຍນຳກັນ ແຕ່ມູນຄ່າການຄ້າແມ່ນມີໜ້ອຍຫຼາຍ. ແຕ່ ສປປ ລາວຍັງມີໂອກາດເຂົ້າສູ່ຕະຫຼາດຟີລິປິນ, ບຣູໄນ ແລະ ອິນໂດເນເຊຍ ພາຍໃຕ້ລະບົບສິດທິພິເສດເພື່ອການເຊື່ອມໂຍງເຂົ້າອາຊຽນ (ASEAN Integration Systems of Preferences/AISP). ຍົກເວັ້ນສິງກະໂປທີ່ບໍ່ໄດ້ໃຫ້ສິດທິພິເສດໃນຂອບ AISP ແກ່ປະເທດ CLMV ເນື່ອງຈາກວ່າສິນຄ້າເກືອບທຸກລາຍການມີອັດຕາພາສີນຳເຂົ້າ 0% ແລ້ວ, ຍົກເວັ້ນເຫຼົ້າ ແລະ ຢາສູບ.

## ບຣູໄນ

ນັບແຕ່ປີ 2007, ບຣູໄນໄດ້ໃຫ້ສິດທິພິເສດພາສີນຳເຂົ້າ 0% ໃນຂອບ AISP ແກ່ປະເທດ CLMV ຈຳນວນ 20 ລາຍການ (ລະຫັດພາສີ 8 ຕົວເລກ) ປະກອບມີ: ຜະລິດຕະພັນໄມ້ສຳເລັດຮູບ, ໄມ້ອັດ, ເຄື່ອງ ເງິນ, ແລະ ວັດຖຸມີຄ່າ.

## ອິນໂດເນເຊຍ

ນັບແຕ່ປີ 2006, ອິນໂດເນເຊຍໄດ້ໃຫ້ສິດທິພິເສດໃນຂອບ AISP ແກ່ ສປປ ລາວ ມີ ຈຳນວນ 21 ລາຍການ (ລະຫັດພາສີ 8 ຕົວເລກ) ປະກອບມີ: ສິນຄ້າກະສິກຳ ແລະ ຜະລິດຕະພັນໄມ້ສຳເລັດຮູບ ຊຶ່ງບັນດາລາຍການສິນຄ້າດັ່ງກ່າວມີອັດຕາພາສີນຳເຂົ້າ 0% ແລະ 5%.

## ຟີລິບປິນ

ນັບແຕ່ປີ 2005, ຟີລິປິ້ນໄດ້ໃຫ້ສິດທິພິເສດພາສີນໍາເຂົ້າ 0% ໃນຂອບ AISP ແກ່ ສປປ ລາວ ຈໍານວນ 88 ລາຍການ (ລະຫັດພາສີ 8 ຕົວເລກ) ປະກອບມີ: ສິນຄ້າກະສິກໍາ, ຜະລິດຕະພັນໄມ້, ພືດ, ແລະ ຜັກ.

ເພື່ອໃຫ້ສາມາດສົ່ງອອກໄປຍັງຕະຫຼາດຂ້າງເທິງພາຍໃຕ້ຂອບ AISP, ລະບຽບແຫຼ່ງກໍາເນີດສິນຄ້າຈະຕ້ອງໄດ້ຮັບການປະຕິບັດ. ບັນຊີລາຍການສິນຄ້າສາມາດຊອກໄດ້ໃນແຜ່ນຊີດີ ຄັດຕິດກັບປຶ້ມຄູ່ມືເຫຼັ້ມນີ້.

# ການາດາ

ການາດາເປັນຕະຫຼາດນຳເຂົ້າທີ່ໃຫຍ່ ຊຶ່ງຈັດຢູ່ໃນອັນດັບທີ 10 ຂອງໂລກໃນປີ 2007. ສິນຄ້ານຳເຂົ້າຫຼັກປະກອບດ້ວຍສິນຄ້າທີ່ນຳໃຊ້ເຕັກໂນໂລຊີສູງເຊັ່ນ: ຍານພາຫະນະ, ປະເພດເຮືອບິນ, ຢາປົວພະຍາດ, ນ້ຳມັນເຊື້ອໄຟ ເປັນ ຕົ້ນ. ສະພາບການພົວພັນການຄ້າສອງຝ່າຍລະຫວ່າງ ສປປ ລາວ ແລະ ການາດາ ຍັງບໍ່ມີການຂະຫຍາຍຕົວດີເທົ່າທີ່ຄວນ. ມູນຄ່າສົ່ງອອກຂອງລາວໄປການາດາ ນັບແຕ່ປີ 2003 ເປັນຕົ້ນມາບໍ່ເກີນ 6 ລ້ານໂດລາສະຫະລັດ. ສິນຄ້າສົ່ງອອກຫຼັກຂອງ ສປປ ລາວ ແມ່ນເຄື່ອງຕັດຫຍິບ ແລະ ແຜ່ນແພ. ໃນຖານະເປັນປະເທດດ້ອຍພັດທະນາ, ສປປ ລາວ ສາມາດສົ່ງອອກສິນຄ້າທຸກປະເພດໄປການາດາໃນອັດຕາພາສີນຳເຂົ້າ 0% ແລະ ບໍ່ມີໂກຕາ ພາຍໃຕ້ລະບົບສິດທິພິເສດທາງດ້ານການຄ້າສຳລັບປະເທດດ້ອຍພັດທະນາ.

## ລະບົບສິດທິພິເສດທາງດ້ານການຄ້າແກ່ປະເທດດ້ອຍພັດທະນາຂອງການາດາ (LDCT)

ການາດາຍົກເວັ້ນພາສີນຳເຂົ້າ ແລະ ໂກຕານຳເຂົ້າໃຫ້ແກ່ທຸກປະເພດສິນຄ້າທີ່ມີແຫຼ່ງກຳເນີດຈາກປະເທດດ້ອຍພັດທະນາ. ແຕ່ວ່າປະລິມານການນຳເຂົ້າຂອງບາງປະເພດສິນຄ້າເຊັ່ນ: ປະເພດນົມ, ຊີ້ນໄກ່, ແລະ ປະເພດໄຂ່ ແມ່ນຖືກຄວບຄຸມເປັນພິເສດໂດຍລັດຖະບານການາດາ.

ເພື່ອສົ່ງອອກສິນຄ້າໄປການາດາພາຍໃຕ້ລະບົບສິດທິພິເສດດັ່ງກ່າວ, ລະບຽບແຫຼ່ງກຳເນີດສິນຄ້າຕ້ອງໄດ້ຮັບການປະຕິບັດຢ່າງເຄັ່ງຄັດ. ໂດຍພື້ນຖານແລ້ວ, ທຸກສິນຄ້າທີ່ໄດ້ຮັບສິດທິພິເສດຂ້າງເທິງໃນປະຈຸບັນ ຈະຖືກພິຈາລະນາວ່າມີແຫຼ່ງກຳເນີດມາຈາກປະເທດ LDCs ເມື່ອ: 1) ສຳລັບຜະລິດຕະພັນແຮ່ທາດ, ສິນຄ້າກະສິກຳ, ສັດ, ໆລໆ ຕ້ອງມີແຫຼ່ງກຳເນີດຈາກ ສປປ ລາວ

100%; 2) ຖ້າມູນຄ່າຂອງວັດຖຸດິບ, ສິ້ນສ່ວນ ຫຼື ຜະລິດຕະພັນ ທີ່ມີແຫຼ່ງກໍາເນີດນອກ ສປປ ລາວ, ຫຼື ຈາກສະຖານທີ່ໆບໍ່ສາມາດລະບຸໄດ້, ແລະ ໃຊ້ເຂົ້າໃນການປຸງແຕ່ງ ຫຼື ຜະລິດສິນຄ້າສົ່ງອອກນັ້ນຕ້ອງບໍ່ເກີນ 60% ຂອງລາຄາໂຮງງານຂອງສິນຄ້າດັ່ງກ່າວທີ່ຖືກຫຸ້ມຫໍ່ເພື່ອຈັດສົ່ງໄປການາດາ; ແລະ 3) ຖ້າມີຄວາມຕ້ອງການສົ່ງອອກແຜ່ນແພ ແລະ ເຄື່ອງນຸ່ງຫົ່ມ, ຈະຕ້ອງປະຕິບັດຕາມລະບຽບແຫຼ່ງກໍາເນີດທີ່ມີສະເພາະສໍາລັບສິນຄ້າດັ່ງກ່າວ (ຂໍ້ມູນເພີ່ມເຕີມສາມາດເບິ່ງໄດ້ໃນເວັບໄຊ້ທີ່ມີຢູ່ໃນພາກສຸດທ້າຍຂອງປຶ້ມຄູ່ມືນີ້).

# ສະຫະພາບເອີຣົບ

ສະຫະພາບເອີຣົບ ຫຼື ອີຢູ ແມ່ນໜຶ່ງໃນຕະຫຼາດນຳເຂົ້າໃຫຍ່ທີ່ສຸດຂອງໂລກ. ສິນຄ້ານຳເຂົ້າຫຼັກຂອງອີຢູຈາກທົ່ວໂລກລວມມີຜະລິດຕະພັນອຸດສາຫະກຳເຊັ່ນ: ເຄື່ອງຈັກ, ຜະລິດຕະພັນເຄມີ, ແລະ ພະລັງງານ. ອີຢູເປັນປະເທດຄູ່ຄ້າໃຫຍ່ອັນດັບທີ 4 ຂອງ ສປປ ລາວ. ສຳລັບອີຢູແລ້ວ, ສປປ ລາວ ເປັນຄູ່ຄ້າອັນດັບທີ 154. ໃນປີ 2007, ມູນຄ່າການສົ່ງອອກຂອງ ສປປ ລາວ ໄປອີຢູ ບັນລຸໄດ້ 176 ລ້ານໂດລາສະຫະລັດ, ຊຶ່ງກວມເອົາ 11% ຂອງມູນຄ່າການສົ່ງອອກທັງໝົດຂອງ ສປປ ລາວ.

ສິນຄ້າສົ່ງອອກຕົ້ນຕໍທີ່ ສປປ ລາວ ສົ່ງໄປອີຢູ ມີ: ແຜ່ນແພ ແລະ ຜະລິດຕະພັນຕັດຫຍິບ (ໝວດລະຫັດພາສີ HS 50 ຫາ 63) ແລະ ສິນຄ້າກະສິກຳ (ໝວດລະຫັດພາສີ HS 06 ຫາ14). ສິນຄ້າສົ່ງອອກອື່ນໆຂອງ ສປປ ລາວ ໄປ ອີຢູ ທີ່ມີມູນຄ່າການສົ່ງອອກໜ້ອຍລວມມີ: ຜະລິດຕະພັນຈາກຜັກ, ແກ້ວປະເສີດ, ເກີບ, ໝວກ, ຄັນຮົ່ມ, ໆລໆ. ສປປ ລາວ ແມ່ນມີທ່າໄດ້ປຽບໃນການສົ່ງອອກຜະລິດຕະພັນຕັດຫຍິບ ແລະ ແຜ່ນແພໄປຕະຫຼາດຂອງອີຢູ ເພາະວ່າ ສປປ ລາວ ໄດ້ຮັບນະໂຍບາຍໂຍະຍານຈາກລະບຽບແຫຼ່ງກຳເນີດສິນຄ້າທີ່ເຄັ່ງຄັດ (Derogation)[4] ຊຶ່ງນະໂຍບາຍນີ້ຈະໝົດກຳນົດໃນທ້າຍປີ 2009. ເຖິງຢ່າງໃດກໍ່ຕາມ, ລະບຽບວ່າດ້ວຍແຫຼ່ງກຳເນີດສິນຄ້າທີ່ຄຸ້ມຄອງການນຳເຂົ້າແຜ່ນແພ ແລະ ຜະລິດຕະພັນຕັດຫຍິບຍັງຖືວ່າເຄັ່ງຄັດຫຼາຍ.[5]

---

[4] **ລະບົບ Derogation:** ອານຸຍາດໃຫ້ຜູ້ຜະລິດສາມາດນຳໃຊ້ວັດຖຸດິບເພື່ອເຂົ້າມາຜະລິດໃນຂັ້ນຕອນການຜະລິດສຸດທ້າຍຫຼາຍກວ່າປົກກະຕິ ແລະ ສາມາດນຳມາຈາກຫຼາຍແຫຼ່ງ ຊຶ່ງບໍ່ຖືກຕັ້ງເງື່ອນໄຂກ່ຽວກັບ ມູນຄ່າເພີ່ມ Value Added ໃນການດຳເນີນການຜະລິດຢູ່ ສປປ ລາວ.

[5] **ລະບົບ ASEAN Cumulation** ແມ່ນການນຳເອົາວັດຖຸດິບຈາກປະເທດສະມາຊິກອາຊຽນເຂົ້າມາຜະລິດເພື່ອສົ່ງອອກ. ສຳລັບສິນຄ້າຕັດຫຍິບ, ຜູ້ຜະລິດສາມາດນຳວັດຖຸດິບເຂົ້າມາ(ແຜ່ນແພ) ຈາກປະເທດສະມາຊິກອາຊຽນເພື່ອການຜະລິດ ແລະ ສາມາດໄດ້ຮັບການຍົກເວັ້ນພາສີ

## ລະບົບທຸກສິ່ງທຸກຢ່າງຍົກເວັ້ນອາວຸດ (EBA)

ລະບົບທຸກສິ່ງທຸກຢ່າງຍົກເວັ້ນອາວຸດ ຫຼື EBA ໄດ້ຖືກສ້າງຕັ້ງຂຶ້ນໃນປີ 2002. EBA ອະນຸຍາດໃຫ້ທຸກລາຍການສິນຄ້າ, ຍົກເວັ້ນອາວຸດ ແລະ ລາຍການສິນຄ້າຍ່ອຍຂອງໝວດ 41 ວ່າດ້ວຍນ້ຳຕານ ແລະ ເຂົ້າກິນ, ສາມາດເຂົ້າຕະຫຼາດຂອງອີຢູໄດ້ໂດຍໄດ້ຮັບການຍົກເວັ້ນພາສີ ແລະ ໂກຕານຳເຂົ້າ. ສິນຄ້າປະເພດເຂົ້າກິນ ແລະ ນ້ຳຕານແມ່ນຖືກຍົກເວັ້ນຈາກລະບົບ EBA ຊົ່ວຄາວຍ້ອນຄວາມອ່ອນໄຫວຂອງມັນ. ພາສີນຳເຂົ້າຂອງສິນຄ້າສອງປະເພດນີ້ຈະຖືກລົບລ້າງໃນເດືອນຕຸລາ ແລະ ເດືອນທັນວາ ປີ 2009 ຕາມລຳດັບ. ໃນຊ່ວງທີ່ຍັງບໍ່ມີການລົບລ້າງ, ຈະມີການກຳນົດໂກຕານຳເຂົ້າທີ່ແນ່ນອນ. ໂກຕານຳເຂົ້າສຳລັບນ້ຳຕານ ແລະ ເຂົ້າກິນ ໃນສົກປີ 2008-2009 ແມ່ນຖືກລະບຸໄວ້ໃນຕາຕະລາງລຸ່ມນີ້. ໂກຕານຳເຂົ້າໂດຍບໍ່ມີພາສີຂອງນ້ຳຕານ ແລະ ເຂົ້າກິນໄປອີຢູແມ່ນມີຈຳກັດ ຈຶ່ງຕ້ອງໄດ້ແຂ່ງຂັນກັນຂໍໂກຕາດັ່ງກ່າວ.

ສຳລັບ ຜູ້ຜະລິດນ້ຳຕານພາຍໃນ ສປປ ລາວ ໄດ້ຂໍໂກຕານຳເຂົ້ານ້ຳຕານດັ່ງກ່າວຈາກອີຢູແລ້ວ.

<u>ຕາຕະລາງ 2</u> ໂກຕານຳເຂົ້ານ້ຳຕານ ແລະ ເຂົ້າກິນຂອງອີຢູ ໃນສົກປີ 2008-2009

| ລ/ດ | ລະຫັດ CN | ລາຍການ | ຈຳນວນໂກຕາ | ຄຳສັ່ງເລກທີ |
|---|---|---|---|---|
| 1 | 1006 | ເຂົ້າກິນ | 6,694 ໂຕນ | 09.4178 |
| 2 | 1701 11 10 | ນ້ຳຕານ | 197,335 ໂຕນ | 09.4308 |

ອີງຕາມບົດບັນຍັດຂອງ EBA, ໄລຍະເວລາຂອງການໃຫ້ສິດທິພິເສດແມ່ນບໍ່ຈຳກັດ ແລະ ບໍ່ຮຽກຮ້ອງໃຫ້ຕໍ່ອາຍຸ. ນີ້ໝາຍຄວາມວ່າ ສປປ ລາວ ຈະສືບຕໍ່ໄດ້ຮັບສິດທິພິເສດພາຍໃຕ້ຂອບນີ້ຕໍ່ໄປຈົນກວ່າ ສປປ ລາວ ຈະຫຼຸດພົ້ນ

ໃນກໍລະນີທີ່ການຜະລິດຂັ້ນສຸດທ້າຍຂອງສິນຄ້ານັ້ນສາມາດສ້າງມູນຄ່າເພີ່ມຊຶ່ງສູງກວ່າລາຄາຂອງວັດຖຸດິບທີ່ນຳເຂົ້າ.

ອອກຈາກສະຖານະພາບການເປັນປະເທດດ້ອຍພັດທະນາ. ເຖິງຢ່າງໃດກໍ ຕາມ, ບາງລາຍການສິນຄ້າອາດຈະຖືກຖອດອອກຈາກລະບົບ EBA ຖ້າປະລິ ມານສົ່ງອອກຂອງລາຍການສິນຄ້ານັ້ນ ເກີນເພດານນຳເຂົ້າທີ່ອີຢູໄດ້ຕັ້ງໄວ້. ນອກຈາກນີ້, ອີຢູຍັງສາມາດນຳໃຊ້ ມາດຕະການໂຕ້ຕອບການທຸ້ມຕະຫຼາດ ຕໍ່ກັບສິນຄ້ານຳເຂົ້າຈາກ ສປປ ລາວ ຖ້າອີຢູພິສູດໄດ້ວ່າສິນຄ້ານັ້ນບໍ່ໄດ້ຜະ ລິດຢູ່ ສປປ ລາວ ແຕ່ມີເຈດຕະນານຳເຂົ້າຈາກປະເທດທີສາມເພື່ອສົ່ງຕໍ່ອອກ ໄປອີຢູໃນລະບົບ EBA.

ຕະຫຼາດອີຢູເປັນຕະຫຼາດທ່າແຮງໃນການສ້າງກຳໄລ ສຳລັບຜະລິດຕະ ພັນທີ່ມີມູນຄ່າເພີ່ມສູງ. ແຕ່ລະບຽບການ ກ່ຽວກັບ ມາດຕະຖານ ແລະ ສຸຂະນາ ໄມ (SPS/TBT) ແມ່ນມີຄວາມເຂັ້ມງວດຫຼາຍ, ໂດຍສະເພາະສິນຄ້າທີ່ມີແຫຼ່ງ ກຳເນີດປະເພດກະສິກຳ ແລະ ສັດລ້ຽງ. ສິນຄ້າຈຳພວກນີ້ແມ່ນຖືກຄຸ້ມຄອງ ໂດຍລະບຽບການສະເພາະ. ເຖິງວ່າ ສປປ ລາວ ໄດ້ຮັບສິດທິພິເສດພາຍໃຕ້ ລະບົບ EBA ແຕ່ຜູ້ສົ່ງອອກກໍ່ຍັງຕ້ອງປະຕິບັດຕາມລະບຽບການນຳເຂົ້າທີ່ ຮຽກຮ້ອງໃຫ້ມີການສຶກສາຢ່າງລະອຽດກ່ອນການສົ່ງອອກ.

# ອິນເດຍ

ໃນປີ 2007, ອິນເດຍໄດ້ນຳເຂົ້າທັງໝົດ 230.5 ຕື້ໂດລາສະຫະລັດ ກວມເອົາ 1.61% ຂອງການນຳເຂົ້າໃນທົ່ວໂລກ. ສະນັ້ນ, ອິນເດຍຈຶ່ງຖືກຈັດເປັນປະເທດທີ່ມີຕະຫຼາດນຳເຂົ້າໃຫຍ່ອັນດັບທີ່ 18 ຂອງໂລກ. ປະເພດສິນຄ້ານຳເຂົ້າຫຼັກປະກອບດ້ວຍ ນ້ຳມັນດິບ, ກົນຈັກ, ອັນຍະມະນີ, ປຸ໋ຍ, ແລະ ເຄມີທາດ. ສຳລັບການຄ້າລະຫວ່າງ ສປປ ລາວ ແລະ ອິນເດຍ ແມ່ນຍັງຕໍ່າ. ສິນຄ້າທີ່ລາວສົ່ງອອກໄປອິນເດຍຕົ້ນຕໍແມ່ນຜະລິດຕະພັນໄມ້, ສິນຄ້າກະສິກຳ, ແຜ່ນແພ, ໄມ້ປ່ອງ, ແລະ ເຄື່ອງປ່າຂອງນາ. ສປປ ລາວ ສາມາດເຂົ້າສູ່ຕະຫຼາດອິນເດຍໄດ້ໃນ 3 ວິທີ.

## ລະບົບສິດທິພິເສດທາງດ້ານການຄ້າຂອງອິນເດຍສຳລັບປະເທດດ້ອຍພັດທະນາ (DFTP)

ອິນເດຍໄດ້ໃຫ້ສິດທິພິເສດທາງດ້ານການຄ້າແບບຝ່າຍດຽວແກ່ 50 ປະເທດດ້ອຍພັດທະນາ, ລວມທັງ ສປປ ລາວ. ລະບົບນີ້ເອີ້ນວ່າ: ລະບົບສິດທິພິເສດທາງດ້ານການຄ້າຂອງອິນເດຍສຳລັບປະເທດດ້ອຍພັດທະນາ (India's Duty Free Tariff Preference Scheme for Least Developed Countries), ຊຶ່ງເປັນຜົນມາຈາກການປະກາດຂອງທ່ານນາຍົກລັດຖະມົນຕີອິນເດຍໃນກອງປະຊຸມສຸດຍອດອິນເດຍ-ອາຟຣິກາ ທີ່ ນິວເດລີ, ຄັ້ງວັນທີ 08 ເມສາ 2008. ລະບົບສິດທິພິເສດນີ້ເລີ່ມມີຜົນນັບແຕ່ວັນທີ 13 ສິງ ຫາ 2008 ເປັນຕົ້ນມາ. ສິດທິພິເສດ DFTP Scheme ແມ່ນກວມເອົາ 94% ຂອງບັນຊີລາຍການສິນຄ້າທັງໝົດຂອງອິນເດຍ ຊຶ່ງກວມເອົາ 92.5% ຂອງ ລາຍການສິນຄ້າສົ່ງອອກຂອງປະເທດດ້ອຍພັດທະນາໃນທົ່ວໂລກ. ລະບົບສິດທິພິເສດດັ່ງກ່າວປະກອບມີ 03 ບັນຊີສິນຄ້າຄື:

- ບັນຊີລາຍການສິນຄ້າທີ່ມີອັດຕາພາສີ 0% (Duty Free List): ປະກອບມີ 4,430 ລາຍການສິນຄ້າ ຊຶ່ງກວມເອົາ 85% ຂອງບັນຊີສິນຄ້າທັງໝົດຂອງອິນເດຍ.
- ບັນຊີລາຍການສິນຄ້າທີ່ຫຼຸດຜ່ອນອັດຕາພາສີ (Positive List): ປະກອບມີ 468 ລາຍການ ຊຶ່ງກວມເອົາ 9% ຂອງບັນຊີສິນຄ້າທັງໝົດຂອງອິນເດຍ. ບັນຊີນີ້ຈະຫຼຸດຜ່ອນອັດຕາພາສີລົງຮອດ 0% ເທື່ອລະໜ້ອຍພາຍໃນໄລຍະ 05 ປີ. ການຫຼຸດພາສີແມ່ນນຳໃຊ້ອັດຕາສ່ວນການຫຼຸດເປັນສ່ວນຮ້ອຍ (MOP)[6] ຈາກອັດຕາພາສີ MFN.
- ບັນຊີລາຍການສິນຄ້າຍົກເວັ້ນ (Exclusion List): ປະກອບ ມີ 326 ລາຍການ ຊຶ່ງກວມເອົາ 6% ຂອງບັນຊີສິນຄ້າທັງໝົດຂອງອິນເດຍທີ່ບໍ່ນຳມາຫຼຸດພາສີໃນລະບົບສິດທິພິເສດດັ່ງກ່າວ.

## ຂອບສັນຍາການຄ້າອາຊີ-ປາຊີຟິກ (APTA)

ພາຍໃຕ້ຂອບສັນຍາການຄ້າອາຊີ-ປາຊີຟິກ (APTA), ອິນເດຍໄດ້ຫຼຸດຜ່ອນອັດຕາພາສີນຳເຂົ້າໃຫ້ແກ່ ສປປ ລາວ ຕາມອັດຕາສ່ວນການຫຼຸດເປັນສ່ວນຮ້ອຍ (MOP) ດັ່ງຕໍ່ໄປນີ້:

- **<u>ບັນຊີຫຼຸດຜ່ອນອັດຕາພາສີພາຍໃນ:</u>** ມີທັງໝົດ 570 ລາຍການ (ໝວດລະຫັດພາສີ HS 3 ຫາ 96) ປະກອບມີ ປາ ແລະ ສັດນ້ຳທີ່ບໍ່ມີກະດູກສັນຫຼັງ, ເຄມີພັນອິນຊີ, ນ້ຳມັນຫອມ, ຜະລິດຕະພັນເຄມີປະສົມ, ຢາງ, ໄມ້, ເຈ້ຍ, ຝ້າຍ, ແຜ່ນແພ, ເຄື່ອງປັ້ນດິນເຜົາ, ຜະລິດຕະພັນໂລຫະ, ອຸປະກອນກົນຈັກ, ແລະ ຜະລິດຕະພັນອຸດສາຫະກຳ

---

[6] Margin of Preference (MoP) means the percentage of tariff by which tariffs (basic customs duties as included in the National Customs Schedule of India) are reduced on products imported from the Beneficiary Countries as a result of preferential treatment.

ອື່ນໆ ຊຶ່ງມີອັດຕາສ່ວນການຫຼຸດເປັນສ່ວນຮ້ອຍ (MOP) ຈາກອັດຕາທົ່ວໄປ MFN ທີ່ສູງສຸດແມ່ນ 100% ແລະ ຕໍ່າສຸດແມ່ນ 5%.

- **<u>ບັນຊີຫຼຸດຜ່ອນອັດຕາພາສີພິເສດສໍາລັບປະເທດສະມາຊິກທີ່ເປັນປະເທດດ້ອຍພັດທະນາ:</u>** ມີທັງໝົດ 48 ລາຍການ ປະກອບມີ ໜັງດິບ, ເຈ້ຍ, ເຫຼັກກ້າ ແລະ ຜະລິດຕະພັນເຫຼັກ ຊຶ່ງມີ ອັດຕາສ່ວນການຫຼຸດເປັນສ່ວນຮ້ອຍ (MOP) ຈາກອັດຕາທົ່ວໄປ MFN ທີ່ສູງສຸດແມ່ນ 100% ແລະ ຕໍ່າສຸດແມ່ນ 14%.

## ຂອບສັນຍາການຄ້າເສລີອາຊຽນ-ອິນເດຍ (AIFTA)

ໃນກອງປະຊຸມສຸດຍອດອາຊຽນ-ອິນເດຍ ຄັ້ງທີ 02 ໃນວັນທີ 08 ຕຸລາ 2003 ທີ່ ບາຫຼີ, ປະເທດອິນໂດເນເຊຍ, ໄດ້ມີການລົງນາມໃນຂອບສັນຍາວ່າດ້ວຍ ການຮ່ວມມືຮອບດ້ານທາງເສດຖະກິດ ລະຫວ່າງ ອາຊຽນ ແລະ ອິນເດຍ (Framework Agreement on Comprehensive Economic Cooperation between ASEAN and India). ເຖິງຢ່າງໃດກໍ່ຕາມ, ອາຊຽນ ແລະ ອິນເດຍ ຍັງມີຄວາມເຫັນທີ່ແຕກຕ່າງກັນ ກ່ຽວກັບ ວິທີການຫຼຸດອັດຕາພາສີນໍາເຂົ້າ. ດັ່ງນັ້ນ, ສັນຍາວ່າດ້ວຍການຄ້າດ້ານສິນຄ້າຈຶ່ງບໍ່ທັນໄດ້ລົງນາມ. ໃນເມື່ອສັນຍາການຄ້າເສລີອາຊຽນ-ອິນເດຍ (AIFTA) ໄດ້ຖືກລົງນາມແລ້ວ, ອາຊຽນ ແລະ ອິນເດຍ ຈະຕ້ອງເຫັນດີເຫັນພ້ອງກັນໃນການຫຼຸດພາສີນໍາເຂົ້ານໍາກັນ. ຊຶ່ງສາມາດຄາດຄະເນໄດ້ວ່າເລີ່ມແຕ່ຕົ້ນປີ 2009 ເປັນຕົ້ນໄປ, 80% ຂອງບັນຊີສິນຄ້າທັງໝົດຈະຕ້ອງໄດ້ນໍາມາຫຼຸດຜ່ອນ ແລະ ຍົກເວັ້ນອັດຕາພາສີນໍາເຂົ້າ. ພາຍໃນປີ 2012, 70% ຂອງບັນຊີສິນຄ້າທີ່ໄດ້ຕົກລົງກັນຈະໄດ້ຮັບການຍົກເວັ້ນພາສີນໍາເຂົ້າ, ສ່ວນອັດຕາພາສີນໍາເຂົ້າຂອງບັນຊີສິນຄ້າທີ່ຍັງເຫຼືອ ແມ່ນຈະຖືກຍົກເວັ້ນພາຍໃນປີ 2015. ສໍາລັບສິນຄ້າທີ່ນອນໃນບັນຊີສິນຄ້າກະທົບໄວ ແລະ ກະທົບໄວສູງ, ວິທີການ ຫຼຸດຜ່ອນອັດຕາພາສີນໍາເຂົ້າຈະມີການກໍານົດຕ່າງຫາກ.

# ຍີ່ປຸ່ນ

ຍີ່ປຸ່ນໄດ້ຖືກຈັດເປັນປະເທດນຳເຂົ້າອັນດັບທີ 4 ຂອງໂລກ ຖັດຈາກສະຫະລັດອາເມລິກາ, ເຢຍລະມັນ, ແລະ ຈີນ. ມູນຄ່າການນຳເຂົ້າທັງໝົດຂອງຍີ່ປຸ່ນ ໃນປີ 2007 ແມ່ນ 621.1 ຕື້ໂດລາສະຫະລັດ ຊຶ່ງກວມເອົາ 4.4% ຂອງມູນຄ່າການນຳເຂົ້າທັງໝົດໃນທົ່ວໂລກ. ຍີ່ປຸ່ນຄ້າຂາຍກັບ 211 ປະເທດໃນໂລກ ແລະ ສປປ ລາວ ຖືກຈັດເປັນປະເທດນຳເຂົ້າອັນດັບທີ 133 ຂອງຍີ່ປຸ່ນໃນປີ 2007. ສິນຄ້າສົ່ງອອກຫຼັກຂອງ ສປປ ລາວ ໄປຍີ່ປຸ່ນມີຜະລິດຕະພັນໄມ້, ເຄື່ອງຫັດຖະກຳ, ຜະລິດຕະພັນອຸດສາຫະກຳ, ຕັດຫຍິບ, ຜະລິດຕະພັນກະສິກຳ, ຫວາຍ ແລະ ໄມ້ປ່ອງ, ແລະ ກາເຟ. ສປປ ລາວ ສາມາດເຂົ້າສູ່ຕະຫຼາດຍີ່ປຸ່ນ ໂດຍນຳໃຊ້ສິດທິພິເສດພາຍໃຕ້ລະບົບສິດທິພິເສດທາງການຄ້າແບບທົ່ວໄປສຳລັບປະເທດດ້ອຍພັດທະນາ (GPT), ແລະ ເຂດການຄ້າເສລີອາຊຽນ-ຍີ່ປຸ່ນ.

## ລະບົບອັດຕາພາສີພິເສດແບບທົ່ວໄປສຳລັບປະເທດດ້ອຍພັດທະນາ (GPT)

ໃນປີ 1971, ຍີ່ປຸ່ນໄດ້ຈັດຕັ້ງປະຕິບັດລະບົບສິດທິພິເສດທາງການຄ້າແບບທົ່ວໄປໃຫ້ແກ່ປະເທດກຳລັງພັດທະນາ ແລະ ປະເທດດ້ອຍພັດທະນາ. ນັບຕັ້ງແຕ່ປີ 2001 ເປັນຕົ້ນມາ, ຍີ່ປຸ່ນໄດ້ມີການປັບປຸງລະບົບສິດທິພິເສດຂອງຕົນຫຼາຍຄັ້ງ. ໃນມໍ່ໆມານີ້, ຍີ່ປຸ່ນໄດ້ຂະຫຍາຍລາຍການສິນຄ້າທີ່ມີສິດໄດ້ຮັບການເຂົ້າສູ່ຕະຫຼາດແບບບໍ່ມີພາສີນຳເຂົ້າ ແລະ ໂກຕາ ແກ່ປະເທດດ້ອຍພັດທະນາມາເປັນ 8,859 ລາຍການ ໃນວັນທີ 01 ເມສາ 2007. ສິນຄ້າເຫຼົ່ານີ້ປະກອບມີ ຜະລິດຕະພັນກະສິກຳຈຳນວນ 1,055 ລາຍການ ທີ່ມີລະຫັດພາສີ (HS) 06 ຕົວເລກ, ຜະລິດຕະພັນແຜ່ນແພ ຈຳນວນ 1,999 ລາຍການ ທີ່ມີລະ

ທັດພາສີ (HS) 06 ຕົວເລກ. ພ້ອມກັນນີ້, ຍັງມີຜະລິດຕະພັນອຸດສາຫະກຳ, ເຄື່ອງທັດຖະກຳ, ແລະ ຜະລິດຕະພັນແຮ່ທາດ.

## ສັນຍາຄູ່ຮ່ວມມືຮອບດ້ານທາງເສດຖະກິດລະຫວ່າງອາຊຽນ-ຍີ່ປຸ່ນ (AJCEP)

ໃນວັນທີ 08 ຕຸລາ 2003, ຂອບສັນຍາວ່າດ້ວຍການຮ່ວມມືຮອບດ້ານທາງເສດຖະກິດໄດ້ຖືກລົງນາມທີ່ ບາຫຼີ, ປະເທດອິນໂດເນເຊຍ. ສັນຍານີ້ແມ່ນແນໃສ່ການເປີດກວ້າງ ແລະ ເພີ່ມທະວີການຮ່ວມມື ພ້ອມທັງອຳນວຍຄວາມສະດວກທາງດ້ານການຄ້າ, ການລົງທຶນ, ແລະ ການບໍລິການ ລະຫວ່າງ ອາຊຽນ ແລະ ຍີ່ປຸ່ນ. ໃນປີ 2005 ອາຊຽນ ແລະ ຍີ່ປຸ່ນ ໄດ້ເລີ່ມດຳເນີນການເຈລະຈາ ເພື່ອສ້າງເຂດການຄ້າເສລີທາງດ້ານການຄ້າດ້ານບໍລິການ, ການຄ້າດ້ານສິນຄ້າ, ການລົງທຶນ, ແລະ ການຮ່ວມມືທາງດ້ານເສດຖະກິດ. ຮອດທ້າຍປີ 2007, ອາຊຽນ ແລະ ຍີ່ປຸ່ນ ໄດ້ສຳເລັດການເຈລະຈາ ແລະ ໄດ້ລົງນາມໃນສັນຍາຄູ່ຮ່ວມມືຮອບດ້ານທາງເສດຖະກິດລະຫວ່າງອາຊຽນ-ຍີ່ປຸ່ນ (AJCEP) ໃນເດືອນເມສາ ປີ 2008. ພາຍໃຕ້ສັນຍາດັ່ງກ່າວ, ສປປ ລາວ ໄດ້ຮັບປະໂຫຍດໃນການຫຼຸດຜ່ອນອັດຕາພາສີນຳເຂົ້າເປັນ 0% ແລະ 5% ສຳລັບສິນຄ້າ 10,690 ລາຍການ ທີ່ມີລະຫັດພາສີ (HS) 08 ຕົວເລກ ແຕ່ຍັງມີການຍົກເວັ້ນສຳລັບຜະລິດຕະພັນກະສິກຳ ແລະ ອຸດສາຫະກຳ ຈຳນວນ 200 ລາຍການທີ່ຍັງມີອັດຕາພາສີສູງ.

# ປະເທດໄທ

ໃນປີ 2007, ປະເທດໄທໄດ້ຖືກຈັດເປັນອັນດັບ 27 ຂອງບັນດາປະເທດທີ່ມີຕະຫຼາດນຳເຂົ້າທີ່ໃຫຍ່ທີ່ສຸດຂອງໂລກ ຊຶ່ງມີມູນຄ່ານຳເຂົ້າທັງໝົດແມ່ນ 140.8 ຕື້ໂດລາສະຫະລັດ ຊຶ່ງກວມເອົາ 1 % ຂອງການນຳເຂົ້າໃນທົ່ວໂລກ. ປະເທດໄທຄ້າຂາຍກັບ 207 ປະເທດໃນໂລກ. ສປປ ລາວ ໄດ້ຖືກຈັດຢູ່ໃນອັນດັບທີ 35 ຂອງປະເທດທີ່ສົ່ງອອກໄປໄທ. ສິນຄ້າສົ່ງອອກຫຼັກຂອງ ສປປ ລາວ ໄປໄທມີ: ໄຟຟ້າ, ຜະລິດຕະພັນໄມ້, ທວາຍ ແລະ ໄມ້ປ່ອງ, ແຮ່ທາດ, ເຄື່ອງປ່າຂອງນາ, ເຄື່ອງຕັດຫຍິບ, ສິນຄ້າກະສິກຳ (ກະລ່ຳປີ, ໝາກເດືອຍແຫ້ງ, ໝາກກ້ວຍ, ສາລີ, ຖົ່ວເຫຼືອງ, ມັນຝລັ່ງ, ປໍສາແຫ້ງ, ຂີງ, ໝາກງາ, ໝາກຕາວ, ໝາກຂາມ, ແລະ ໜັງ). ສິນຄ້າລາວມີໂອກາດເຂົ້າສູ່ຕະຫຼາດໄທໃນອັດຕາພາສີນຳເຂົ້າທີ່ຕ່ຳ ພາຍໃຕ້ລະບົບສິດທິພິເສດເພື່ອການເຊື່ອມໂຍງເຂົ້າອາຊຽນ (AISP) ແລະ ພາຍໃຕ້ຂອບສັນຍາການຄ້າເສລີອາຊຽນ(CEPT).

## ລະບົບສິດທິພິເສດເພື່ອການເຊື່ອມໂຍງເຂົ້າອາຊຽນ (AISP)

ນັບແຕ່ປີ 2003 ເປັນຕົ້ນມາ, ປະເທດໄທໄດ້ໃຫ້ສິດທິພິເສດແບບຝ່າຍດຽວຕໍ່ການນຳເຂົ້າສິນຄ້າຈາກ ສປປ ລາວ ໃນຂອບ AISP ມີທັງໝົດ 252 ລາຍການທີ່ມີລະຫັດພາສີ (HS) 10 ຕົວເລກ. ໃນນັ້ນ, ມີລາຍການສິນຄ້າຈຳນວນ 160 ລາຍການ ທີ່ມີອັດຕາພາສີນຳເຂົ້າ 0% (ເຄື່ອງຕັດຫຍິບ, ສາລີ ແລະ ໝາກເດືອຍແຫ້ງ, ເຄື່ອງດື່ມ, ແຮ່ທາດ, ໝາກໄມ້ ແລະ ພືດຜັກ, ແລະ ເຄື່ອງປ່າຂອງດົງ), ສ່ວນລາຍການສິນຄ້າທີ່ຍັງເຫຼືອນັ້ນ ແມ່ນມີອັດຕາພາສີນຳເຂົ້າ 5% (ສັດລ້ຽງ, ຜະລິດຕະພັນໄມ້, ເຄື່ອງຕັດຫຍິບ ແລະ ສິນຄ້າກະສິກຳບາງປະເພດ). ສິນຄ້າກະສິກຳແມ່ນນອນຢູ່ໃນໝວດ 07 ຫາ 24; ສິນຄ້າປະເພດແຮ່ທາດແມ່ນນອນໃນໝວດທີ 25 ຫາ 27; ຜະລິດຕະພັນໄມ້ແມ່ນ

ນອນໃນໝວດທີ 94; ແລະ ເຄື່ອງຕັດຫຍິບ ແລະ ແຜ່ນແພ ແມ່ນນອນໃນໝວດທີ 61 ຫາ 62 ຂອງປຶ້ມສາລະບານພາສີອາຊຽນ.

## ຂອບສັນຍາການຄ້າເສລີອາຊຽນ (AFTA/CEPT)

ສປປ ລາວ ຍັງສາມາດສົ່ງອອກໄປໄທ ພາຍໃຕ້ຂອບການຄ້າເສລີອາຊຽນ (AFTA/CEPT) ໃນອັດຕາພາສີນຳເຂົ້າທີ່ຕ່ຳຢູ່ໃນລະຫວ່າງ 0 ຫາ 5%. ລາຍການສິນຄ້າພາຍໃຕ້ຂອບນີ້ແບ່ງອອກເປັນ 3 ບັນຊີຄື: 1) ລາຍການສິນຄ້າທີ່ມີອັດຕາພາສີນຳເຂົ້າ 0% ມີ 5,380 ລາຍການ; 2) ລາຍການສິນຄ້າທີ່ມີອັດຕາພາສີ 5% ລວມມີ 5,455 ລາຍການ ຊຶ່ງປະກອບມີ: ສິນຄ້າກະສິກຳ, ຜະລິດຕະພັນໄມ້, ຜະລິດຕະພັນອຸດສາຫະກຳ, ເຄື່ອງປ່າຂອງດົງ, ເຄື່ອງໜັງ, ສັດລ້ຽງ, ແລະ ແຮ່ທາດ; ແລະ 3) ລາຍການສິນຄ້າກະທົບໄວ ຊຶ່ງກວມເອົາສິນຄ້າກະສິກຳ ຈຳນວນ 20 ລາຍການ ທີ່ມີລະຫັດພາສີ (HS) 08 ຕົວເລກ.

# ມາເລເຊຍ

ໃນປີ 2007, ມາເລເຊຍໄດ້ນຳເຂົ້າທັງໝົດ 139.1 ຕື້ໂດລາສະຫະລັດ ແລະ ໄດ້ຖືກຈັດເປັນອັນດັບ 27 ຂອງບັນດາປະເທດທີ່ມີຕະຫຼາດນຳເຂົ້າທີ່ໃຫຍ່ທີ່ສຸດຂອງໂລກ ຊຶ່ງກວມເອົາ 1 % ຂອງການນຳເຂົ້າໃນທົ່ວໂລກ. ສິນຄ້ານຳເຂົ້າຫຼັກຂອງມາເລເຊຍປະກອບມີ: ເຄື່ອງເອເລັກໂຕຼນິກ, ເຄື່ອງຈັກ, ນ້ຳມັນ, ປລາສຕິກ, ລົດຍົນ, ເຫຼັກ ແລະ ເຫຼັກກ້າ. ສິນຄ້າທີ່ ສປປ ລາວ ສົ່ງອອກໄປມາເລເຊຍຕົ້ນຕໍມີ: ຜະລິດຕະພັນແຮ່ທາດ (ທອງແດງ), ຜະລິດຕະພັນໄມ້, ກາເຟ, ສິນຄ້າກະສິກຳ, ແລະ ເຄື່ອງຕັດຫຍິບ. ສປປ ລາວ ສາມາດເຂົ້າສູ່ຕະຫຼາດມາເລເຊັຍໃນອັດຕາພາສີນຳເຂົ້າທີ່ຕ່ຳພາຍໃຕ້ຂອບAISP ແລະ CEPT.

## ລະບົບສິດທິພິເສດເພື່ອການເຊື່ອມໂຍງເຂົ້າອາຊຽນ (AISP)

ນັບແຕ່ປີ 2003, ມາເລເຊຍໄດ້ໃຫ້ສິດທິພິເສດຕໍ່ການນຳເຂົ້າສິນຄ້າຈາກ ສປປ ລາວ ໃນຂອບ AISP ມີທັງໝົດ 83 ລາຍການ ທີ່ມີລະຫັດພາສີ (HS) 8 ຕົວເລກ ຊຶ່ງປະກອບມີ: ຜະລິດຕະພັນໄມ້, ເຄື່ອງເງິນ, ຄຳ, ຖົ່ວດິນ, ແລະ ແຜ່ນແພ.

## ພາຍໃຕ້ຂອບສັນຍາການຄ້າເສລີອາຊຽນ (AFTA/CEPT)

ພາຍໃຕ້ເຂດການຄ້າເສລີອາຊຽນ, ອັດຕາສີນຳເຂົ້າມາເລເຊຍແມ່ນຢູ່ໃນລະຫວ່າງ 0% ຫາ 5% ເກືອບໝົດທຸກລາຍການສິນຄ້າ ຊຶ່ງກວມເອົາຈຳນວນ 14,335 ລາຍການ ທີ່ມີລະຫັດພາສີ (HS) 8 ຕົວເລກ. ໃນນັ້ນ, 32 ລາຍການສິນຄ້າມີອັດຕາພາສີນຳເຂົ້າສູງກວ່າ 5%, ແລະ 6 ລາຍການສິນຄ້າມີອັດຕາພາສີນຳເຂົ້າ 20%. ບາງລາຍການສິນຄ້າ ຍັງມີອັດຕາພາສີນຳເຂົ້າສູງເຊັ່ນ: ໝາກໄມ້ ແລະ ເຂົ້າກິນ.

## ນອກແວ

ໃນປີ 2007, ນອກແວໄດ້ນຳເຂົ້າທັງໝົດ 77.24 ຕື້ໂດລາສະຫະລັດ ແລະ ໄດ້ຖືກຈັດເປັນອັນດັບ 40 ຂອງບັນດາປະເທດທີ່ມີຕະຫຼາດນຳເຂົ້າທີ່ໃຫຍ່ທີ່ສຸດຂອງໂລກ ຊຶ່ງກວມເອົາ 0.56% ຂອງການນຳເຂົ້າໃນທົ່ວໂລກ. ສິນຄ້ານຳເຂົ້າຫຼັກຂອງນອກແວປະກອບມີ: ກົນຈັກ ແລະ ອຸປະກອນ, ເຄມີທາດ, ໂລຫະ, ແລະ ສິນຄ້າບໍລິໂພກ. ສິນຄ້າທີ່ ສປປ ລາວ ສົ່ງອອກສິນຄ້າຈຳນວນໜຶ່ງໄປນອກແວ ຊຶ່ງປະກອບມີ: ສິນຄ້າອຸດສາຫະກຳ (ຕົ້ນຕໍແມ່ນແຜ່ນແພ ແລະ ເຄື່ອງຕັດຫຍິບ), ແລະ ຜະລິດຕະພັນໄມ້. ສປປ ລາວ ແມ່ນໄດ້ຮັບຜົນປະໂຫຍດຈາກລະບົບສິດທິພິເສດແບບທົ່ວໄປ (GSP) ທີ່ນອກແວໄດ້ໃຫ້ແກ່ປະເທດດ້ອຍພັດທະນາ.

### ລະບົບສິດທິພິເສດແບບທົ່ວໄປສຳລັບປະເທດດ້ອຍພັດທະນາ

ໃນເດືອນ ມີນາ ປີ 1971 ນອກແວໄດ້ຈັດຕັ້ງປະຕິບັດການໃຫ້ສິດທິພິເສດແບບທົ່ວໄປສຳລັບປະເທດດ້ອຍພັດທະນາ. ຕັ້ງແຕ່ປີ 2002 ເປັນຕົ້ນມາ, ນອກແວໄດ້ໃຫ້ສິດທິພິເສດໃນການເຂົ້າສູ່ຕະຫຼາດແບບບໍ່ມີພາສີນຳເຂົ້າ ແລະ ໂກຕາ ສຳລັບທຸກລາຍການສິນຄ້າທີ່ນຳເຂົ້າຈາກປະເທດດ້ອຍພັດທະນາ. ຊຶ່ງປະກອບມີທັງໝົດ 64 ປະເທດທີ່ມີລາຍຮັບແຫ່ງຊາດຕ່ຳ, ລວມທັງ ສປປ ລາວ ທີ່ໄດ້ຮັບສິດທິພິເສດດັ່ງກ່າວ.

# ສາທາລະນະລັດ ປະຊາຊົນຈີນ

ຈີນເປັນໜຶ່ງໃນຕະຫຼາດນຳເຂົ້າທີ່ໃຫຍ່ທີ່ສຸດຂອງໂລກ. ປະເທດຄູ່ຄ້າຫຼັກຂອງຈີນແມ່ນ ສະຫະລັດອາເມລິກາ, ຮົງກົງ, ຍີ່ປຸ່ນ, ສ.ເກົາຫລີ, ເຢຍລະມັນ, ແລະ ຈີນ-ໄຕ້ຫວັນ. ໃນປີ 2007, ມູນຄ່ານຳເຂົ້າ ແລະ ສົ່ງອອກທັງໝົດຂອງຈີນບັນລຸໄດ້ 371.8 ຕື້ໂດລາສະຫະລັດ. ສິນຄ້ານຳເຂົ້າຫຼັກຂອງຈີນລວມມີ ເຄື່ອງຈັກ ແລະ ອຸປະກອນ, ນ້ຳມັນ ແລະ ເຊື້ອເພີງຈາກພື້ນດິນ, ຢາງປລາສຕິກ, ດອກໄຟສີສຳລັບກະດານໂຄສະນາ, ອຸປະກອນຜະລິດຂໍ້ມູນ, ແກ້ວແວ່ນຕາ ແລະ ອຸປະກອນການແພດ, ເຄມີອິງຄະທາດ, ເຫຼັກກ້າ, ແລະ ທອງແດງ.

ສຳລັບ ສປປ ລາວ, ຈີນເປັນປະເທດຄູ່ຄ້າໃຫຍ່ເປັນອັນດັບສອງຮອງຈາກໄທ. ລັດຖະບານແຫ່ງ ສປປ ລາວ ແລະ ສປ ຈີນ ໄດ້ວາງເປົ້າໝາຍໃນການເພີ່ມມູນຄ່າການຄ້າໃຫ້ໄດ້ 1 ຕື້ໂດລາສະຫະລັດ ໃນໄລຍະປີ 2006 ຫາ 2010. ຮອດເດືອນ ຕຸລາ ປີ 2008, ມູນຄ່າການຄ້າລາວ-ຈີນ ບັນລຸໄດ້ປະມານ 348 ລ້ານໂດລາສະຫະລັດ. ສິນຄ້າຕົ້ນຕໍຂອງ ສປປ ລາວ ທີ່ສົ່ງອອກໄປ ສປ ຈີນ ປະກອບມີ: ແຮ່ທາດ, ສິນຄ້າກະສິກຳ, ຫັດຖະກຳ, ເຄື່ອງປ່າຂອງດົງ, ໄມ້ ແລະ ຜະລິດຕະພັນໄມ້, ແລະ ເຟີນີເຈີ. ສປປ ລາວ ມີ ໂອກາດເຂົ້າສູ່ຕະຫຼາດຂອງຈີນໃນຫຼາຍຮູບແບບຄື:

## ຂອບສັນຍາການຄ້າເສລີອາຊຽນ-ຈີນ (ACFTA)

ສັນຍາເຂດການຄ້າເສລີອາຊຽນ-ຈີນ ແລະ ຂອບສັນຍາວ່າດ້ວຍການຮ່ວມມືເສດຖະກິດຢ່າງຮອບດ້ານໄດ້ຖືກຮັບຮອງເອົາໃນເດືອນພະຈິກ ປີ 2001 ແລະ ໄດ້ຖືກລົງນາມໃນວັນທີ 04 ພະຈິກ 2002 ໃນກອງປະຊຸມສຸດຍອດອາ

ຊຽນ-ຈີນ ທີ່ ພະນົມເປນ, ປະເທດກຳປູເຈຍ, ຊຶ່ງເປັນນິມິດໝາຍຂອງການເລີ່ມຕົ້ນສ້າງຕັ້ງເຂດການຄ້າເສລີອາຊຽນ-ຈີນ ໃຫ້ສຳເລັດພາຍໃນ 10 ປີ.

**ສິດທິພິເສດທາງການຄ້າຈາກຈີນພາຍໃຕ້ລະບົບອັດຕາພາສີພິເສດ (Special Preferential Tariff SPT)**

ຂອບສັນຍາວ່າດ້ວຍການຮ່ວມມືເສດຖະກິດຢ່າງຮອບດ້ານ ໄດ້ກຳນົດໃຫ້ອາຊຽນ ແລະ ສປ ຈີນ ດຳເນີນການສ້າງເຂດການຄ້າເສລີຮ່ວມກັນ ໂດຍການຫຼຸດພາສີໃນການເຂົ້າສູ່ຕະຫຼາດ ແລະ ລົບລ້າງສິ່ງກີດຂວາງຂອງການຄ້າທີ່ບໍ່ແມ່ນພາສີລະຫວ່າງອາຊຽນ ແລະ ຈີນ, ພ້ອມທັງເຮັດໃຫ້ການອຳນວຍຄວາມສະດວກທາງດ້ານການຄ້າ ແລະ ລົງທຶນໃຫ້ປະກົດເປັນຈິງ. ອີງຕາມສັນຍາດັ່ງກ່າວ, ຈີນ ກັບ ປະເທດສະມາຊິກອາຊຽນເກົ່າ 6 ປະເທດ (ບຣູໄນດາຣຸດຊາລາມ, ອິນໂດເນເຊຍ, ມາເລເຊຍ, ຟີລິບປິນ, ສິງກະໂປ ແລະ ໄທ), ແລະ ຈີນ ກັບ ປະເທດ CLMV ( ກຳປູເຈຍ, ສປປ ລາວ, ມຽນມາ ແລະ ຫວຽດນາມ) ຈະລົບລ້າງອັດຕາພາສີນຳເຂົ້າຂອງສິນຄ້າທົ່ວໄປ ໃຫ້ສຳເລັດໃນປີ 2010 ແລະ 2015 ຕາມລຳດັບ. ຂອບສັນຍານີ້ຍັງຊຸກຍູ້ເຮັດໃຫ້ການເປີດຕະຫຼາດການຄ້າໃຫ້ໄວຂຶ້ນ ລະຫວ່າງທັງສອງຝ່າຍ ບົນພື້ນຖານຕ່າງຝ່າຍຕ່າງມີຜົນປະໂຫຍດ. ຈີນໄດ້ສັນຍາຈະຊ່ວຍເຫລືອປະເທດສະມາຊິກອາຊຽນໃໝ່ (CLMV) ໃນການອຳນວຍຄວາມສະດວກໃຫ້ການເຂົ້າຮ່ວມໃນສັນຍານີ້ຢ່າງມີປະສິດທິຜົນ ແລະ ລົບລ້າງຊ່ອງຫວ່າງທາງດ້ານການພັດທະນາຂອງທັງສອງຝ່າຍ. ອີງໃສ່ລະບຽບການຂອງສັນຍາດັ່ງກ່າວ, ສປປ ລາວ ໄດ້ຮັບສິດທິພິເສດແບບຝ່າຍດຽວທາງການຄ້າໃນລະບົບອັດຕາພາສີພິເສດ (SPT) ຈາກ ສປ ຈີນ ຊຶ່ງກວມເອົາຈຳນວນ 330 ລາຍການ ທີ່ມີອັດຕາພາສີ 0% ໃນການນຳເຂົ້າ ສປ ຈີນ.

**ໂຄງການສ້າງຜົນປະໂຫຍດເສດຖະກິດໃນເບື້ອງຕົ້ນ (Early Harvest Program EHP)**

ຂອບສັນຍາວ່າດ້ວຍການຮ່ວມມືເສດຖະກິດຢ່າງຮອບດ້ານ ຍັງກວມເອົາໂຄງການສ້າງຜົນປະໂຫຍດເສດຖະກິດໃນເບື້ອງຕົ້ນ (Early Harvest Programme-EHP) ທີ່ມີຈຸດປະສົງໃນການສ້າງຜົນປະໂຫຍດໃນເບື້ອງຕົ້ນກ່ອນການຫຼຸດອັດຕາພາສີທີ່ນຳສະເໜີໃຫ້ໂດຍຄູ່ສັນຍາ. EHP ໄດ້ໃຫ້ມີການຫຼຸດອັດຕາພາສີນຳເຂົ້າສຳລັບສິນຄ້າກະສິກຳທີ່ບົ່ງໄວ້ໃນໝວດ 1 ຫາ 8[7] ຂອງລະບົບພາສີເອກະພາບ Harmonized System (HS). ອົງປະກອບທີ່ສຳຄັນຂອງໂຄງການ EHP ແມ່ນ ສປ ຈີນ ໄດ້ຫຼຸດອັດຕາພາສີແບບຝ່າຍດຽວໃຫ້ປະເທດສະມາຊິກອາຊຽນ. ການສົ່ງອອກໄປ ສປ ຈີນ ຂອງສິນຄ້າຈາກບັນດາປະເທດອາຊຽນໃນໝວດ 1 ຫາ 8 ຂອງລະບົບພາສີເອກະພາບ (HS) ຈະໄດ້ຮັບການຫຼຸດພາສີໝົດທຸກລາຍການ, ສ່ວນການສົ່ງອອກຂອງ ສປ ຈີນ ໄປຫາບັນດາປະເທດອາຊຽນໃນໝວດ 1 ຫາ 8 ຂອງລະບົບພາສີເອກະພາບ (HS) ແມ່ນບໍ່ໄດ້ຮັບການຫຼຸດພາສີໝົດທຸກລາຍການ. ຍ້ອນວ່າ ສປ ຈີນ ໄດ້ອະນຸຍາດໃຫ້ອາຊຽນເຮັດບັນຊີຍົກເວັ້ນ (Exclusion Lists) ສຳລັບລາຍການສິນຄ້າທີ່ຕົນບໍ່ສາມາດຫຼຸດອັດຕາພາສີໃຫ້ສິນຄ້າຂອງ ສປ ຈີນ ໄດ້. ສ່ວນກຳນົດການຈັດຕັ້ງປະຕິບັດການຫຼຸດອັດຕາພາສີຂອງໂຄງການ EHP ນັ້ນ ແມ່ນແຕກຕ່າງກັນລະຫວ່າງປະເທດອາຊຽນເກົ່າ, ສປ ຈີນ, ແລະ ປະເທດສະມາຊິກອາຊຽນໃໝ່.

ສຳລັບ ສປປ ລາວ ແລະ ສປ ຈີນ, ແມ່ນເລີ່ມຕົ້ນຫຼຸດອັດຕາພາສີໃນໂຄງການ EHP ໃນວັນທີ 1 ມັງກອນ 2006 ແລະ ໃຫ້ສຳເລັດໃນວັນທີ 1 ມັງກອນ 2009 ໂດຍໃຫ້ເຫຼືອ 0%. ລາຍການສິນຄ້າທີ່ ສປປ ລາວ ບໍ່ນຳເອົາມາຫຼຸດອັດຕາພາສີ ຫຼື ບັນຊີຍົກເວັ້ນ (Exclusion Lists) ຂອງ ສປປ ລາວ ກັບ ຈີນ

[7] ໝວດ 1 ຫາ 8 (ສັດທີ່ມີຊີວິດ, ຊີ້ນ ແລະ ສ່ວນອື່ນໆທີ່ບໍລິໂພກໄດ້, ປາ, ຜະລິດຕະພັນນົມ, ຜະລິດຕະພັນຈາກສັດອື່ນໆ, ຕົ້ນໄມ້ທີ່ມີຊີວິດ, ພືດຜັກທີ່ບໍລິໂພກໄດ້, ແລະ ໝາກໄມ້ ແລະ ໝາກໄມ້ເປືອກແຂງທີ່ບໍລິໂພກໄດ້)

ມີທັງໝົດ 56 ລາຍການ ຕາມລະບົບພາສີເອກະພາບ (HS) 06 ຕົວເລກ. ສ່ວນລາຍການສິນຄ້າທີ່ ສປ ຈີນ ບໍ່ນຳເອົາມາຫຼຸດອັດຕາພາສີ ຫຼື ບັນຊີຍົກເວັ້ນ (Exclusion Lists) ຂອງ ສປ ຈີນ ໃຫ້ ສປປ ລາວ ມີທັງໝົດ 178 ລາຍການ ຕາມລະບົບພາສີເອກະພາບ (HS) 08 ຕົວເລກ. ບັນຊີລາຍການສິນຄ້າທີ່ໄດ້ຫຼຸດຜ່ອນອັດຕາພາສີເປັນ 0% ໃນໂຄງການສ້າງຜົນປະໂຫຍດເສດຖະກິດໃນເບື້ອງຕົ້ນ (Early Harvest Program) ທີ່ ສປ ຈີນ ໃຫ້ ສປປ ລາວ ມີ ທັງໝົດ 372 ລາຍການ, ຊຶ່ງແມ່ນສິນຄ້າກະສິກຳເປັນສ່ວນໃຫຍ່.

## ຂອບສັນຍາການຄ້າອາຊີ-ປາຊີຟິກ (APTA)

ພາຍໃຕ້ຂອບສັນຍາການຄ້າອາຊີ-ປາຊີຟິກ (APTA), ຈີນໄດ້ຫຼຸດຜ່ອນອັດຕາພາສີນຳເຂົ້າໃຫ້ແກ່ ສປປ ລາວ ດັ່ງຕໍ່ໄປນີ້:

- **<u>ບັນຊີຫຼຸດຜ່ອນອັດຕາພາສີພາຍໃນ:</u>** ມີທັງໝົດ 1,967 ລາຍການ ປະກອບມີ ສັດລ້ຽງ, ປາ ແລະ ຜະລິດຕະພັນປາ, ພືດຜັກ, ສິນຄ້າກະສິກຳ, ສິນຄ້າອຸດສາຫະກຳ, ໜັງ, ຜະລິດຕະພັນໄມ້ ແລະ ເຄື່ອງຕັດຫຍິບ. ຊຶ່ງມີອັດຕາສ່ວນການຫຼຸດເປັນສ່ວນຮ້ອຍ (MOP) ຈາກອັດຕາທົ່ວໄປ MFN ທີ່ສູງສຸດແມ່ນ 100% ແລະ ຕ່ຳສຸດແມ່ນ 5%.
- **<u>ບັນຊີຫຼຸດຜ່ອນອັດຕາພາສີພິເສດສຳລັບປະເທດສະມາຊິກທີ່ເປັນປະເທດດ້ອຍພັດທະນາ:</u>** ມີທັງໝົດ 161 ລາຍການ ປະກອບມີ ປາ ແລະ ຜະລິດຕະພັນປາ, ສິນຄ້າກະສິກຳ, ພືດຜັກ, ເຄື່ອງຕັດຫຍິບ ແລະ ຜະລິດຕະພັນໜັງ ຊຶ່ງມີອັດຕາສ່ວນການຫຼຸດເປັນສ່ວນຮ້ອຍ (MOP) ຈາກອັດຕາທົ່ວໄປ MFN ທີ່ສູງສຸດແມ່ນ 100% ແລະ ຕ່ຳສຸດແມ່ນ 20%.

## ການຄ້າຊາຍແດນ

ໃນປີ 1990, ລັດຖະບານຈີນໄດ້ຮັບຮອງການໃຫ້ນະໂຍບາຍພິເສດ ເພື່ອຜັກດັນໃຫ້ມີການພັດທະນາທາງດ້ານເສດຖະກິດ ແລະ ການຄ້າຊາຍແດນ ໃນຂົງເຂດຊາຍແດນລະຫວ່າງຈີນ ແລະ ປະເທດເພື່ອນບ້ານ ລວມທັງ ສປປ ລາວ. ສຳລັບປະຊາຊົນທີ່ອາໄສຢູ່ຕາມຊາຍແດນ ຜູ້ໜຶ່ງຈະໄດ້ຮັບການຍົກເວັ້ນການເສຍພາສີນຳເຂົ້າສິນຄ້າເຄື່ອງໃຊ້ສອຍປະຈຳວັນ ຫຼື ການຄ້ານ້ອຍທີ່ມີມູນຄ່າຕ່ຳກວ່າ 3,000 ຢວນ (US$ 360) ຕໍ່ມື້. ນັບແຕ່ເດືອນພະຈິກ 2008, ມູນຄ່າດັ່ງກ່າວໄດ້ເພີ່ມມາເປັນ 8,000 ຢວນ (US$ 1,171.3) ຕໍ່ມື້.[8]

## ສິດທິພິເສດທາງການຄ້າແກ່ປະເທດດ້ອຍພັດທະນາຂອງຈີນ-ໄຕ້ຫວັນ

ນັບແຕ່ວັນທີ 10 ມັງກອນ 2006 ເປັນຕົ້ນມາ, ຈີນ-ໄຕ້ຫວັນໄດ້ໃຫ້ສິດທິພິເສດທາງການຄ້າແກ່ປະເທດດ້ອຍພັດທະນາ 50 ປະເທດ, ລວມທັງ ສປປ ລາວ. ດັ່ງນັ້ນ, ສປປ ລາວ ສາມາດສົ່ງສິນຄ້າຈຳນວນທັງໝົດ 125 ໄປຈີນ-ໄຕ້ຫວັນ ໂດຍບໍ່ເສັຍພາສີ ແລະ ບໍ່ມີໂກຕາ.[9]

---

[8] ຂໍ້ມູນຈາກເວັບໄຊຂອງກະຊວງການຄ້າຈີນ

[9] ອີງຕາມໜັງສືພິມໄຕ້ຫວັນທາມ

# ສາທາລະນະລັດ ເກົາຫລີ

ໃນປີ 2007, ສ. ເກົາຫລີ ເປັນປະເທດນຳເຂົ້າອັນດັບ 13 ຂອງໂລກ. ມູນຄ່ານຳເຂົ້າທັງໝົດແມ່ນ 356.8 ຕື້ໂດລາສະຫະລັດ ຊຶ່ງກວມເອົາ 2.5% ຂອງການນຳເຂົ້າທົ່ວໂລກ. ສ. ເກົາຫລີ ຄ້າຂາຍກັບ 207 ປະເທດໃນໂລກ. ສປປ ລາວ ຖືກຈັດຢູ່ໃນອັນດັບທີ 83 ຂອງຕະຫຼາດນຳເຂົ້າສຳລັບ ສ.ເກົາຫລີ. ສິນຄ້າຫຼັກທີ່ ສປປ ລາວ ສົ່ງອອກໄປ ສ. ເກົາຫລີ ມີ: ຜະລິດຕະພັນໄມ້, ແຮ່ທາດ, ໂລຫະ, ເຄື່ອງຫັດຖະກຳ, ຜະລິດຕະພັນອຸດສາຫະກຳ, ເຄື່ອງຕັດຫຍິບ, ສິນຄ້າກະສິກຳ, ແລະ ກາເຟ. ສິນຄ້າຂອງ ສປປ ລາວ ສາມາດເຂົ້າສູ່ຕະຫຼາດຂອງ ສ.ເກົາຫຼີ ພາຍໃຕ້ການໃຫ້ສິດທິພິເສດໃນ 3 ຮູບແບບ.

## ລະບົບສິດທິພິເສດທີ່ປະເທດກຳລັງພັດທະນາໃຫ້ແກ່ປະເທດດ້ອຍພັດທະນາ

ໃນວັນທີ 01 ມັງກອນ 2000, ສ. ເກົາຫຼີ ໄດ້ປະຕິບັດການໃຫ້ສິດທິພິເສດທາງພາສີແກ່ປະເທດດ້ອຍພັດທະນາ ລວມທັງ ສປປ ລາວ. ເມື່ອບໍ່ດົນມານີ້, ສ. ເກົາຫຼີ ໄດ້ໃຫ້ການສູ່ເຂົ້າຕະຫຼາດແບບບໍ່ມີພາສີນຳເຂົ້າ ແລະ ໂກຕາ ຊຶ່ງມີທັງໝົດ 253 ລາຍການ ທີ່ມີລະຫັດພາສີ (HS) 6 ຕົວເລກ ຊຶ່ງປະກອບມີ 60 ໝວດສິນຄ້າໃນປຶ້ມສາລະບານພາສີເຊັ່ນ: ປາ, ກຸ້ງ, ໝາກໄມ້, ຈຳພວກຖົ່ວ, ກາເຟ, ຢາສູບເປັນກອກ, ຜະລິດຕະພັນໄມ້, ເຄື່ອງນຸ່ງຫົ່ມປະເພດຕ່າງໆ, ໂລຫະ, ຄຳ ແລະ ອື່ນໆ.

## ຂອບສັນຍາການຄ້າເສລີອາຊຽນ-ສ.ເກົາຫລີ (AKFTA)

ສັນຍາການຄ້າເສລີອາຊຽນ-ເກົາຫລີໄດ້ຖືກລົງນາມໃນປີ 2004 ທີ່ນຳໄປສູ່ການເຈລະຈາການຄ້າເສລີລະຫວ່າງເກົາຫລີ ແລະ ອາຊຽນ, ຊຶ່ງ

ການເຈລະຈາດັ່ງກ່າວໄດ້ສິ້ນສຸດລົງດ້ວຍຄວາມສຳເລັດ ແລະ ໄດ້ລົງນາມໃນເດືອນທັນວາ ປີ 2005. ສ.ເກົາຫລີໄດ້ໃຫ້ຄຳໝັ້ນສັນຍາວ່າຈະຫຼຸດອັດຕາພາສີນຳເຂົ້າສຳລັບສິນຄ້າທີ່ນອນໃນບັນຊີທຳມະດາ. ວິທີການຫຼຸດ ແລະ ລົບລ້າງອັດຕາພາສີນຳເຂົ້າມີດັ່ງຕໍ່ໄປນີ້:

- ສ.ເກົາຫຼີ ໄດ້ຄ່ອຍຫຼຸດຜ່ອນອັດຕາພາສີໃຫ້ແກ່ ສປປ ລາວ ຈຳນວນ 5,060 ລາຍການສິນຄ້າ ທີ່ມີລະຫັດພາສີ (HS) 6 ຕົວເລກ, ຊຶ່ງການຈັດຕັ້ງປະຕິບັດຈະເລີ່ມຕົ້ນນັບຕັ້ງແຕ່ປີ 2010 ເປັນຕົ້ນໄປ.
- ສິນຄ້າຈຳນວນ 4,734 ລາຍການ ຈະຕ້ອງຖືກນຳມາລົບລ້າງອັດຕາພາສີນຳເຂົ້າໃນວັນທີ 1 ມັງກອນ ປີ 2010.
- ສິນຄ້າຈຳນວນ 326 ລາຍການ ຊຶ່ງສ່ວນໃຫຍ່ກວມເອົາສິນຄ້າຈຳພວກເຄື່ອງຕັດຫຍິບ ແລະ ເຄື່ອງອີເລັກໂທນິກ ຈະຖືກນຳມາຫຼຸດຜ່ອນອັດຕາພາສີນຳເຂົ້າໃຫ້ເຫຼືອ 0% ແລະ 5% ໃນວັນທີ 1 ມັງກອນ ປີ 2016.

## ຂອບສັນຍາການຄ້າອາຊີ-ປາຊີຟິກ (APTA)

ພາຍໃຕ້ສັນຍາການຄ້າອາຊີ-ປາຊີຟິກ (APTA), ສ.ເກົາຫຼີໄດ້ຫຼຸດຜ່ອນອັດຕາພາສີນຳເຂົ້າໃຫ້ແກ່ ສປປ ລາວ ດັ່ງຕໍ່ໄປນີ້:

- **ບັນຊີຫຼຸດຜ່ອນອັດຕາພາສີພາຍໃນ:** ມີທັງໝົດ 1,367 ລາຍການ ທີ່ມີລະຫັດພາສີ (HS) 10 ຕົວເລກ ຊຶ່ງປະກອບມີ ສັດລ້ຽງ, ປາ ແລະ ຜະລິດຕະພັນປາ, ສິນຄ້າກະສິກຳ, ພືດຜັກ, ແຮ່ທາດ, ເຄື່ອງຕັດຫຍິບ, ສິນຄ້າອຸດສາຫະກຳ, ແລະ ໜັງ ທີ່ນອນໃນໝວດ 3 ຫາ 95 ຂອງປື້ມສາລະບານພາສີ ຊຶ່ງມີອັດຕາສ່ວນການຫຼຸດເປັນສ່ວນຮ້ອຍ (MOP) ຈາກອັດຕາທົ່ວໄປ MFN ທີ່ສູງສຸດແມ່ນ 50% ແລະ ຕ່ຳສຸດແມ່ນ 10%.

- <u>**ບັນຊີຫຼຸດຜ່ອນອັດຕາພາສີພິເສດສຳລັບປະເທດສະມາຊິກທີ່ເປັນປະເທດດ້ອຍພັດທະນາ:**</u> ມີທັງໝົດ 306 ລາຍການ ທີ່ມີລະຫັດພາສີ (HS)10 ຕົວເລກ ຊຶ່ງປະກອບມີ ປາ ແລະ ຜະລິດຕະພັນປາ, ພືດຜັກ, ສິນຄ້າກະສິກຳ, ເຄື່ອງຕັດຫຍິບ, ສິນຄ້າອຸດສາຫະກຳ, ແລະ ໜັງ ທີ່ນອນໃນໝວດ 3 ຫາ 95 ຂອງປຶ້ມສາລະບານພາສີ ຊຶ່ງມີອັດຕາສ່ວນການຫຼຸດເປັນສ່ວນຮ້ອຍ (MOP) ຈາກອັດຕາທົ່ວໄປ MFN ທີ່ສູງສຸດແມ່ນ 100% ແລະ ຕ່ຳສຸດແມ່ນ 20%.

# ສະຫະພັນລັດເຊຍ

ລັດເຊຍເປັນໜຶ່ງໃນຕະຫຼາດນຳເຂົ້າໃຫຍ່ທີ່ສຸດຂອງໂລກ. ປະເທດຄູ່ຄ້າຫຼັກຂອງລັດເຊຍແມ່ນ ຮອນລັງ, ອີຕາລີ, ເຢຍລະມັນ, ຕວກກີ, ເບລາຣູດ, ອູເຄຼນ, ຈີນ, ຍີ່ປຸ່ນ, ອາເມລິກາ, ແລະ ສ.ເກົາຫລີ. ໃນປີ 2007, ມູນຄ່າການສົ່ງອອກ ແລະ ນຳເຂົ້າຂອງລັດເຊຍ ບັນລຸໄດ້ 78.31 ຕື້ໂດລາສະຫະລັດ. ສິນຄ້ານຳເຂົ້າຕົ້ນຕໍຂອງລັດເຊຍແມ່ນ ເຄື່ອງຈັກ ແລະ ອຸປະກອນ, ສິນຄ້າບໍລິໂພກ, ຢາປົວພະຍາດ, ຊີ້ນ, ນ້ຳຕານ, ແລະ ຜະລິດຕະພັນເຫຼັກກ້າເຄິ່ງສຳເລັດຮູບ.

ໃນປີ 1976, ສປປ ລາວ ແລະ ລັດເຊຍໄດ້ລົງນາມໃນສັນຍາການຄ້າສອງຝ່າຍ. ເຖິງວ່າມູນຄ່າການຄ້າຂອງສອງປະເທດຍັງໜ້ອຍ, ທັງສອງຝ່າຍລ້ວນແລ້ວແຕ່ມີຄວາມມຸ້ງມາດປາດຖະໜາຢ່າງຕັ້ງໜ້າ ແລະ ມີຄວາມພະຍາຍາມທີ່ຈະຮັດແໜ້ນ ແລະ ເສີມຂະຫຍາຍການພົວພັນ ແລະ ຮ່ວມມືໃນດ້ານນີ້ໃຫ້ເກີດດອກອອກຜົນ. ສິນຄ້າຕົ້ນຕໍຂອງ ສປປ ລາວ ທີ່ສົ່ງອອກໄປລັດເຊຍມີເຄື່ອງຕັດຫຍິບ, ຢາປົວພະຍາດ, ເກີບ, ແລະ ສິນຄ້າກະສິກຳ. ສປປ ລາວ ສາມາດສົ່ງອອກໄປສະຫະພັນລັດເຊຍ ພາຍໃຕ້ລະບົບສິດທິພິເສດທາງການຄ້າ.

## ລະບົບສິດທິພິເສດທາງການຄ້າແບບທົ່ວໄປໃຫ້ແກ່ປະເທດດ້ອຍພັດທະນາ (GSP)

ໃນປີ 1992, ສະຫະພັນລັດເຊຍໄດ້ຈັດຕັ້ງປະຕິບັດລະບົບສິດທິພິເສດທາງດ້ານການຄ້າແບບທົ່ວໄປ (GSP) ໃຫ້ແກ່ບັນດາປະເທດກຳລັງພັດທະນາ 102 ປະເທດ ແລະ ບັນດາປະເທດດ້ອຍພັດທະນາ 50 ປະເທດ. ບັນຊີສິນຄ້າທີ່ສະຫະພັນລັດເຊຍໃຫ້ສິດທິພິເສດທາງການຄ້າແກ່ບັນດາປະເທດກຳລັງພັດທະນາ ແລະ ດ້ອຍພັດທະນາ ແມ່ນອັນດຽວກັນ, ຊຶ່ງປະກອບມີ 65 ລາຍການ

ທີ່ມີລະຫັດພາສີ (HS) 4 ແລະ 6 ຕົວເລກ ກວມເອົາເກືອບໜຶ່ງສ່ວນສີ່ຂອງສາລະບານພາສີທັງໝົດຂອງລັດເຊຍ.

ໃນສິນຄ້າຈຳນວນ 65 ລາຍການນີ້, ມີສິນຄ້າກະສິກຳ (33 ລາຍການ), ສິນຄ້າອຸດສາຫະກຳ (11 ລາຍການ), ແຜ່ນແພ ແລະ ເຄື່ອງນຸ່ງຫົ່ມ (11 ລາຍການ), ໄມ້ ແລະ ຜະລິດຕະພັນໄມ້ (04 ລາຍການ), ເຄື່ອງເຟີນີເຈີ (03 ລາຍການ), ຢາປົວພະຍາດ (01 ລາຍການ), ສິນລະປະກຳ ແລະ ວັດຖຸບູຮານ (01 ລາຍການ). ທຸກລາຍການສິນຄ້າທີ່ນອນໃນຂອບນີ້ ແລະ ມີແຫຼ່ງກຳເນີດຈາກປະເທດດ້ອຍພັດທະນາ ແມ່ນຈະໄດ້ຮັບການເຂົ້າສູ່ຕະຫຼາດແບບບໍ່ມີພາສີນຳເຂົ້າ ແລະ ໂກຕາ.

# ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ

ໃນປີ 2007, ມູນຄ່າການນຳເຂົ້າລວມຂອງ ສສ ຫວຽດນາມ ແມ່ນ 59 ຕື້ໂດລາສະຫະລັດ, ຊຶ່ງຖືກຈັດເປັນຕະຫຼາດນຳເຂົ້າໃຫຍ່ອັນດັບທີ 42 ຂອງໂລກ. ສິນຄ້ານຳເຂົ້າຕົ້ນຕໍຂອງ ສສ ຫວຽດນາມ ລວມມີ ນ້ຳມັນດິບ, ເຄື່ອງຈັກ ແລະ ສິ້ນສ່ວນປະກອບ, ເຫຼັກ ແລະ ຜະລິດຕະພັນເຫຼັກ, ແລະ ແຜ່ນແພ.

ສປປ ລາວ ແລະ ສສ ຫວຽດນາມ ມີການພົວພັນດ້ານເສດຖະກິດ-ການຄ້ານຳກັນມາແຕ່ດົນນານ ແລະ ໄດ້ຮັບການພັດທະນາຢ່າງແຂງແຮງ. ສປປ ລາວ ແລະ ສສ ຫວຽດນາມ ໄດ້ເຊັນສັນຍາການຄ້າໃນວັນທີ 9 ມີນາ 1998. ອີງໃສ່ສັນຍາດັ່ງກ່າວ, ໃນວັນທີ 28 ກໍລະກົດ 2005 ກະຊວງອຸດສາຫະກຳ ແລະ ການຄ້າລາວ ແລະ ກະຊວງອຸດສາຫະກຳ ແລະ ການຄ້າຫວຽດນາມ ກໍ່ໄດ້ເຊັນຂໍ້ຕົກລົງໃນການໃຫ້ບູລິມະສິດອັດຕາພາສີນຳເຂົ້າ ຊຶ່ງໄດ້ເຮັດໃຫ້ການນຳເຂົ້າສິນຄ້າ ທີ່ມີແຫຼ່ງກຳເນີດຈາກທັງສອງປະເທດນີ້ໄດ້ຮັບການຫຼຸດອັດຕາພາສີ ແຕ່ກໍ່ຍັງມີສິນຄ້າຈຳນວນໜຶ່ງທີ່ບໍ່ທັນໄດ້ນຳມາຫຼຸດອັດຕາພາສີ. ໃນລະຫວ່າງປີ 2001-2008, ການພົວພັນການຄ້າລະຫວ່າງສອງປະເທດໄດ້ຮັບການພັດທະນາ ແລະ ຂະຫຍາຍຕົວດ້ວຍຈັງຫວະທີ່ໜ້າເພິ່ງພໍໃຈ. ໃນວັນທີ 17 ມັງກອນ 2009, ຂໍ້ຕົກລົງໃນການໃຫ້ບູລິມະສິດອັດຕາພາສີນຳເຂົ້າລາວ-ຫວຽດນາມດັ່ງກ່າວໄດ້ຮັບການດັດແກ້ ແລະ ເພີ່ມເຕີມ.

## ຂໍ້ຕົກລົງໃນການໃຫ້ບູລິມະສິດອັດຕາພາສີນຳເຂົ້າ ລະຫວ່າງ ສປປ ລາວ ແລະ ສສ ຫວຽດນາມ

ຂໍ້ຕົກລົງໃນການໃຫ້ບູລິມະສິດອັດຕາພາສີນຳເຂົ້າ ກວມເອົາຈຳນວນລາຍ ການສິນຄ້າສົ່ງອອກຈາກ ສປປ ລາວ ໄປ ຫວຽດນາມ ເປັນສ່ວນໃຫຍ່

ຊຶ່ງລວມມີ ໝໍ້ຫຸງເຂົ້າໄຟຟ້າ, ພັດລົມ, ເຄື່ອງປັ່ນໝາກໄມ້, ສິ້ນສ່ວນອາໄຫຼ່ລົດຈັກ, ເບຍລາວ, ໃບຢາສູບ, ກາເຟ, ເຂົ້າສານ, ສາລີ, ແລະ ແຮ່ທາດ.

ພາຍໃຕ້ຂໍ້ຕົກລົງດັ່ງກ່າວ ທຸກລາຍການສິນຄ້າທີ່ມີແຫຼ່ງກໍາເນີດຈາກ ສປປ ລາວ ຈະໄດ້ຮັບການຍົກເວັ້ນພາສີນໍາເຂົ້າຈາກ ສສ ຫວຽດນາມ, ນອກຈາກລາຍການສິນຄ້າທີ່ນອນໃນບັນຊີສິນຄ້າທີ່ໄດ້ຮັບການຫຼຸດຜ່ອນອັດຕາພາສີນໍາເຂົ້າ 50% ຈາກ AFTA/CEPT ຂອງ ສສ ຫວຽດນາມ ຊຶ່ງມີທັງໝົດ 32 ລາຍການທີ່ມີລະຫັດພາສີ (HS) 10 ຕົວເລກ[10], ແລະ ລາຍການສິນຄ້າທີ່ນອນໃນບັນຊີສິນຄ້າຍົກເວັ້ນຂອງ ສສ ຫວຽດນາມ ຊຶ່ງມີທັງໝົດ 155 ລາຍການທີ່ມີລະຫັດພາສີ (HS) 10 ຕົວເລກ.[11] ສໍາລັບສິນຄ້າກະທົບໄວເຊັ່ນ: ເຂົ້າກິນ ແລະ ໃບຢາສູບ, ສສ ຫວຽດນາມ ໄດ້ໃຫ້ໂກຕາຈໍານວນໜຶ່ງໃນການນໍາເຂົ້າໂດຍບໍ່ເສຍພາສີ ຊຶ່ງຈະມີຜົນບັງຄັບໃຊ້ເຖິງປີ 2010. ສໍາລັບເຂົ້າກິນແມ່ນໄດ້ຮັບໂກຕາ 40,000 ໂຕນ ຕໍ່ ປີ ຊຶ່ງປະກອບມີ ເຂົ້າເປືອກ (ເລກລະຫັດພາສີ: HS 1006.10.00.90), ເຂົ້າສານຫອມອື່ນໆ ທີ່ສີແລ້ວ ຫຼື ຍັງບໍ່ທັນສີແລ້ວ, ທີ່ຂັດເງົາ ຫຼື ຍັງບໍ່ຂັດເງົາ (ເລກລະຫັດພາສີ: 1006. 30.19.00), ເຂົ້າສານໜຽວທີ່ສີແລ້ວ ຫຼື ຍັງບໍ່ທັນສີແລ້ວ, ທີ່ຂັດເງົາ ຫຼື ຍັງບໍ່ຂັດເງົາ (ເລກລະຫັດພາສີ: HS 1006.30.30.00) ເຂົ້າສານອື່ນໆ ທີ່ສີແລ້ວ ຫຼື ຍັງບໍ່ທັນສີແລ້ວ, ທີ່ຂັດເງົາ ຫຼື ຍັງບໍ່ຂັດເງົາ (ເລກລະຫັດພາສີ: HS 1006.30.90. 00).

ສ່ວນໃບຢາສູບແມ່ນໄດ້ຮັບໂກຕາ 3,000 ໂຕນຕໍ່ປີ ຊຶ່ງລວມມີ ໃບຢາສູບ Virginia ທີ່ອົບດ້ວຍອາຍຮ້ອນແລ້ວ ແຕ່ບໍ່ໄດ້ເອົາກ້ານອອກ (ເລກລະຫັດພາສີ: HS 2401.10.10.00), ໃບຢາສູບ Virginia ທີ່ບໍ່ໄດ້ອົບດ້ວຍອາຍຮ້ອນ ແລະ ບໍ່ໄດ້ເອົາກ້ານອອກ (ເລກລະ ຫັດພາສີ: HS 2401.10. 20.00), ໃບຢາສູບອື່ນໆທີ່ອົບດ້ວຍອາຍຮ້ອນແລ້ວ ແລະ ບໍ່ໄດ້ເອົາກ້ານອອກ (ເລກລະ

[10] ສາລະບານ 1b, ຂໍ້ຕົກລົງໃຫ້ບູລິມາສິດຂາເຂົ້າ ຊຶ່ງກັນ ແລະ ກັນ ລະຫວ່າງ ສປປ ລາວ ແລະ ສສ ຫວຽດນາມ

[11] ສາລະບານ 2b, ຂໍ້ຕົກລົງໃຫ້ບູລິມາສິດຂາເຂົ້າ ຊຶ່ງກັນ ແລະ ກັນ ລະຫວ່າງ ສປປ ລາວ ແລະ ສສ ຫວຽດນາມ

ທັດພາສີ: HS 2401.10.30.00), ໃບຢາສູບອື່ນໆ ທີ່ບໍ່ໄດ້ອົບດ້ວຍອາຍຮ້ອນ ແລະ ບໍ່ໄດ້ເອົາກ້ານອອກ (ເລກລະຫັດພາສີ: HS 2401.10.90. 00), ໃບຢາສູບ Viginia ທີ່ອົບດ້ວຍອາຍຮ້ອນແລ້ວ ແລະ ເອົາກ້ານອອກບາງສ່ວນ ຫຼື ທັງໝົດ (ເລກລະຫັດພາສີ: HS 2401.20.10.00), ໃບຢາສູບ Burley ທີ່ເອົາກ້ານອອກບາງສ່ວນ ຫຼື ທັງໝົດ (ເລກລະຫັດພາສີ: HS 2401.20.40.00), ກ້ານໃບຢາສູບ(ເລກລະຫັດພາສີ: HS 2401.30.10.00).

ນອກນັ້ນ, ຍັງມີບາງລາຍການສິນຄ້າທີ່ຍັງໄດ້ມີການວາງການນຳເຂົ້າຫວຽດນາມ ໂດຍມີໂກຕາເຊັ່ນ: ໄຂ່ສັດປີກ (HS 0407.00.91, HS 0407.00.92, HS 0407.00.99), ເກືອກິນ (HS 2501), ນ້ຳຕານດິບ ແລະ ນ້ຳຕານຊາຍ (HS 1701). ການສົ່ງອອກສິນຄ້າເຫຼົ່ານີ້ຈາກ ສປປ ລາວ ໄປຫວຽດນາມ ຈະສາມາດໄດ້ຮັບການຍົກເວັ້ນພາສີນຳເຂົ້າ ຖ້າປະລິມານການສົ່ງອອກບໍ່ເກີນໂກຕານຳເຂົ້າລວມຂອງຫວຽດນາມ.

# ສະວິດເຊີແລນ

ໃນປີ 2007, ສະວິດເຊີແລນ ເປັນປະເທດນຳເຂົ້າອັນດັບທີ 21 ຂອງໂລກ ທີ່ມີມູນຄ່ານຳເຂົ້າທັງໝົດ 187.1 ຕື້ໂດລາສະຫະລັດ ຊຶ່ງກວມເອົາ 1.36% ຂອງການນຳເຂົ້າໃນທົ່ວໂລກ. ປະເພດສິນຄ້ານຳເຂົ້າຫຼັກມີ: ກົນຈັກ, ເຄມີທາດ, ພາຫະນະ, ໂລຫະ, ສິນຄ້າກະສິກຳ, ແລະ ແຜ່ນແພ. ສິນຄ້າທີ່ ສປປ ລາວ ສົ່ງອອກໄປສະວິດເຊີແລນຕົ້ນຕໍແມ່ນ: ສິນຄ້າກະສິກຳ (ເຂົ້າສານໜຽວ), ເຄື່ອງອຸດສາຫະກຳ (ແຜ່ນແພ, ເບຍ, ແລະ ອື່ນໆ), ເຄື່ອງຫັດຖະກຳ, ແລະ ແຮ່ທາດ (ທອງແດງ ແລະ ເພັດ). ສປປ ລາວ ສາມາດສົ່ງອອກໄປຕະຫຼາດສະວິດເຊີແລນ ພາຍໃຕ້ລະບົບສິດທິພິເສດທາງການຄ້າແບບທົ່ວໄປ (GSP) ທີ່ສະວິດເຊີແລນໄດ້ໃຫ້ແກ່ປະເທດດ້ອຍພັດທະນາ.

## ລະບົບສິດທິພິເສດທາງການຄ້າແບບທົ່ວໄປໃຫ້ແກ່ປະເທດດ້ອຍພັດທະນາ (GSP)

ໃນເດືອນມີນາ ປີ 1972, ສະວິດເຊີແລນ ໄດ້ຈັດຕັ້ງປະຕິບັດການໃຫ້ສິດທິພິເສດທາງການຄ້າແບບທົ່ວໄປໃຫ້ແກ່ປະເທດດ້ອຍພັດທະນາ ໃນຮູບແບບຂອງການຍົກເວັ້ນອັດຕາພາສີໃຫ້ຫຼາຍປະເພດສິນຄ້າ (ຜະລິດຕະພັນອຸດສາຫະກຳທັງໝົດ ແລະ ຜະລິດຕະພັນກະສິກຳຈຳນວນໜຶ່ງ). ພາຍຫຼັງການເຈລະຈາຮອບອູລູກວາຍ, ສະວິດເຊີແລນໄດ້ປັບປຸງລະບົບສິດທິພິເສດທາງການຄ້າແບບທົ່ວໄປທັງໝົດຂອງຕົນຄືນໃໝ່ ແລະ ມີຜົນບັງຄັບໃຊ້ໃນເດືອນມີນາ ປີ 1997. ໂດຍທົ່ວໄປແລ້ວ, ສິດທິພິເສດທາງການຄ້າທີ່ໃຫ້ແກ່ປະເທດດ້ອຍພັດທະນາ ແມ່ນໄດ້ຮັບການເປີດກວ້າງຫຼາຍຂຶ້ນ ຊຶ່ງກວມເອົາຫຼາຍລາຍການສິນຄ້າກະສິກຳ ແຕ່ຍັງມີການຈຳກັດປະລິມານການນຳເຂົ້າ. ສຳລັບສິນຄ້າອຸດສາຫະກຳທີ່ນອນໃນ ໝວດ 25 ຫາ 97, ອັດຕາພາສີນຳເຂົ້າໄດ້ຖືກລົບລ້າງ

ໂດຍບໍ່ຈຳກັດປະລິມານ ຍົກເວັ້ນເຄື່ອງຕັດຫຍິບ ແລະ ເຄື່ອງນຸ່ງຫົ່ມ ທີ່ໄດ້ຮັບການຫຼຸດຜ່ອນອັດຕາພາສີ 50% ຈາກອັດຕາພາສີທົ່ວໄປ (MFN) ຂອງສະວິດເຊີແລນ. ໃນປີ 2007, ສະວິດເຊີແລນໄດ້ປະກາດລະບົບເຂົ້າສູ່ຕະຫຼາດແບບບໍ່ມີພາສີນຳເຂົ້າ ແລະ ໂກຕາ ໃຫ້ແກ່ປະເທດດ້ອຍພັດທະນາ ຊຶ່ງກວມເອົາທຸກລາຍການສິນຄ້າ ໂດຍຍົກເວັ້ນເຂົ້າປາຍ, ທົ່ວອາຫານສັດ, ນ້ຳຕານທີ່ໄດ້ຈາກອ້ອຍ ແລະ ຫົວຜັກກາດ, ແລະ ນ້ຳຕານກ້ອນຊູໂກຣດ. ລະບົບສິດທິພິເສດໃໝ່ນີ້ບໍ່ມີກຳນົດອາຍຸ.

# ຕວກກີ

ໃນປີ 2007, ຕວກກີ ໄດ້ຖືກຈັດເປັນປະເທດນຳເຂົ້າອັນດັບທີ 22 ຂອງໂລກ ທີ່ມີມູນຄ່ານຳເຂົ້າທັງໝົດ 162 ຕື້ໂດລາສະຫະລັດ ຊຶ່ງກວມເອົາ 1.2% ຂອງການນຳເຂົ້າໃນທົ່ວໂລກ. ສິນຄ້ານຳເຂົ້າຫຼັກຂອງຕວກກີ ມີ: ເຄື່ອງກິນຈັກ, ເຄມີທາດ, ຜະລິດຕະພັນເຄິ່ງສຳເລັດຮູບ, ນ້ຳມັນເຊື້ອໄຟ, ແລະ ອຸປະກອນຮັບໃຊ້ໃນການຂົນສົ່ງ. ສິນຄ້າທີ່ ສປປ ລາວ ສົ່ງອອກໄປຕວກກີຕົ້ນຕໍປະກອບມີ: ເຄື່ອງຕັດຫຍິບ ແລະ ເຄື່ອງອຸດສາຫະກຳຈຳນວນໜຶ່ງ ຊຶ່ງມູນຄ່າການສົ່ງອອກຈາກ ສປປ ລາວ ໄປຕວກກີແມ່ນໜ້ອຍຫຼາຍ. ສປປ ລາວ ສາມາດສົ່ງອອກໄປຕະ ຫຼາດຕວກກີພາຍໃຕ້ສິດທິພິເສດທາງການຄ້າແບບທົ່ວໄປ (GSP) ທີ່ຕວກກີໄດ້ໃຫ້ແກ່ປະເທດດ້ອຍພັດທະນາ.

## ລະບົບສິດທິພິເສດທາງການຄ້າແບບທົ່ວໄປໃຫ້ແກ່ປະເທດດ້ອຍພັດທະນາ (GSP)

ໃນວັນທີ 01 ມັງກອນ 2002 ຕວກກີໄດ້ໃຫ້ສິດທິພິເສດທາງການຄ້າແບບທົ່ວໄປໃຫ້ແກ່ບັນດາປະເທດກຳລັງພັດທະນາ ແລະ ດ້ອຍພັດທະນາ ຊຶ່ງລວມມີ ສປປ ລາວ. ລະບົບສິດທິພິເສດທີ່ຕວກກີໄດ້ໃຫ້ນີ້ ແມ່ນຄ້າຍຄືກັນກັບລະບົບຂອງ EU. ສປປ ລາວ ສາມາດເຂົ້າສູ່ຕະຫຼາດຕວກກີແບບບໍ່ມີພາສີນຳເຂົ້າ ແລະ ໂກຕາ ໄດ້ທຸກລາຍການສິນຄ້າອຸດສາຫະກຳທີ່ນອນໃນໝວດ 25-97 (ຍົກເວັ້ນໝວດ 93) ແລະ ບາງລາຍການສິນຄ້າກະສິກຳທີ່ນອນໃນບັນຊີຂອງສະຫະພັນພາສີລະຫວ່າງ ຕວກກີ ແລະ ອີຢູ.

# ສະຫະລັດອາເມລິກາ

ໃນປີ 2007, ສະຫະລັດອາເມລິກາເປັນຕະຫຼາດນຳເຂົ້າທີ່ໃຫຍ່ອັນດັບໜຶ່ງຂອງໂລກ ທີ່ມີມູນຄ່ານຳເຂົ້າທັງໝົດ 2,020.4 ຕື້ໂດລາສະຫະລັດ ຊຶ່ງກວມເອົາ 14.2% ຂອງການນຳເຂົ້າໃນທົ່ວໂລກ. ສິນຄ້ານຳເຂົ້າຕົ້ນຕໍຂອງອາເມລິກາລວມມີ ນ້ຳມັນດິບ ແລະ ນ້ຳມັນເຊື້ອໄຟ, ສິນຄ້າຟຸ່ມເຟືອຍ, ໂທລະສັບມືຖື, ສິນຄ້າບໍລິໂພກ, ວັດຖຸດິບໃຊ້ເຂົ້າໃນການຜະລິດ, ອາຫານ, ແລະ ເຄື່ອງດື່ມ. ອາເມລິກາຄ້າຂາຍກັບ 232 ປະເທດໃນໂລກ. ສປປ ລາວ ເປັນຄູ່ຄ້າຂອງອາເມລິກາທີ່ຖືກຈັດຢູ່ໃນອັນດັບທີ 182 ໃນປີ 2007 ຊຶ່ງຍັບຂື້ນຈາກອັນດັບທີ 193 ໃນປີ 2005. ສິນຄ້າທີ່ ສປປ ລາວ ສົ່ງອອກໄປສະຫະລັດອາເມລິກາຫຼັກປະກອບມີ ເຄື່ອງນຸ່ງຫົ່ມ ແລະ ເຄື່ອງປະກອບໃຊ້ກັບເຄື່ອງນຸ່ງຫົ່ມທີ່ເຮັດດ້ວຍຜ້າທີ່ຖັກແບບນິດ(knitted) ຫຼື ແບບໂຄຣເຊດທ໌(crocheted), ກາເຟ, ຊາ, ຊາມາເຕ ແລະ ເຄື່ອງເທດອື່ນໆ, ເຄື່ອງນຸ່ງຫົ່ມ ແລະ ເຄື່ອງປະກອບເຄື່ອງນຸ່ງຫົ່ມທີ່ບໍ່ໄດ້ຖັກແບບນິດ (knitted) ຫຼື ແບບໂຄຣເຊດທ໌ (crocheted), ເຄື່ອງສິນລະປະກຳ, ເຄື່ອງສະສົມ ຫຼື ເຄື່ອງວັດຖຸບູຮານ ແລະ ສິນຄ້າປະເພດອື່ນໆ.

ສປປ ລາວ ໄດ້ສ້າງສາຍພົວພັນທາງການຄ້າແບບປົກກະຕິກັບສະຫະລັດອາເມລິກາ ຊຶ່ງມັນແມ່ນໝາກຜົນຂອງການເຂົ້າພາຄີໃນສັນຍາການຄ້າສອງຝ່າຍ. ແຕ່ວ່າ ສປປ ລາວ ບໍ່ໄດ້ຮັບຜົນປະໂຫຍດຈາກລະບົບສິດທິພິເສດທາງການຄ້າແບບທົ່ວໄປ (GSP) ທີ່ສະຫະລັດອາເມລິກາໄດ້ໃຫ້ກັບບາງປະເທດດ້ອຍພັດທະນາ.

## ສັນຍາວ່າດ້ວຍສາຍພົວພັນດ້ານການຄ້າລະຫວ່າງ ສປປ ລາວ ແລະ ອາເມລິກາ

ໃນປີ 1997 ສປປ ລາວ ໄດ້ເລີ່ມເຈລະຈາສັນຍາວ່າດ້ວຍການພົວພັນດ້ານການຄ້າລະຫວ່າງ ສປປ ລາວ ແລະ ອາເມລິກາ ຊຶ່ງໄດ້ຖືກລົງນາມ ໃນວັນທີ 18 ກັນຍາ 2003. ສປປ ລາວ ໄດ້ຮັບຖານະການຄ້າແບບປົກກະຕິຖາວອນ (Permanent Normal Trade Relation ຫຼື PNTR) ຈາກລັດຖະສະພາຂອງອາເມລິກາໃນທ້າຍປີ 2004. ຕໍ່ມາໃນເດືອນກຸມພາ ປີ 2005 ສັນຍາດັ່ງກ່າວມີຜົນບັງຄັບໃຊ້ຢ່າງເປັນທາງການ ພາຍຫຼັງທີ່ສະພາແຫ່ງຊາດຂອງ ສປປ ລາວ ໄດ້ໃຫ້ສັດຕະຍາບັນ ແລະ ເຮັດໃຫ້ ສປປ ລາວ ໄດ້ຮັບສະຖານະພາບການຄ້າແບບປົກກະຕິ (NTR). ສັນຍາການຄ້າລາວ-ອາເມລິກາ ປະກອບມີ 40 ມາດຕາ ຊຶ່ງມີ 4 ພາກໃຫຍ່ຄື: ການຄ້າດ້ານສິນຄ້າ, ການຄ້າດ້ານການບໍລິການ, ຊັບສິນທາງປັນຍາທີ່ຕິດພັນກັບການຄ້າ, ແລະ ບັນຍັດທົ່ວໄປ. ເກືອບທຸກພາກຂອງສັນຍາ BTA ແມ່ນໄດ້ນຳໃຊ້ບັນດາຫຼັກການພື້ນຖານຂອງອົງການການຄ້າໂລກເຊັ່ນ: ການປະຕິບັດຕໍ່ຊາດທີ່ໄດ້ຮັບອານຸເຄາະຍິ່ງ, ການປະຕິບັດແບບພາຍໃນຊາດ, ຄວາມໂປ່ງໃສ, ແລະ ການເຂົ້າສູ່ຕະຫຼາດ.

ສັນຍາ BTA ເຮັດໃຫ້ສິນຄ້າຂອງ ສປປ ລາວ ສາມາດ ສາມາດເຂົ້າສູ່ຕະຫຼາດອາເມລິກາ ພາຍໃຕ້ອັດຕາພາສີມາດຕະຖານ (MFN) ທີ່ສະຫະລັດອາເມລິກາເກັບກັບສິນຄ້າຈາກ 228 ປະເທດໃນໂລກ ຍົກເວັ້ນ ສປປ ເກົາຫລີ, ແລະ ກູບາ. ກ່ອນໄດ້ຖານະ NTR ສປປ ລາວ ຕ້ອງໄດ້ເສຍພາສີນຳເຂົ້າອາເມລິກາໂດຍສະເລ່ຍ 45%, ພາຍຫຼັງທີ່ NTR ໄດ້ຖືກຮັບຮອງ ສປປ ລາວ ສົ່ງອອກໄປອາເມລິກາເສຍພາສີນຳເຂົ້າອາເມລິກາໂດຍສະເລ່ຍພຽງແຕ່ 1.93%.

ອັດຕາພາສີນຳເຂົ້າສຳລັບສິນຄ້າກະສິກຳເປັນຕົ້ນແມ່ນ ກາເຟ, ຊາຂຽວ, ແລະ ໝາກໄມ້ເຂດຮ້ອນ ແມ່ນຕ່ຳຫຼາຍ (1.10% ໂດຍສະເລ່ຍ). ສາເຫດທີ່ສະຫະລັດອາເມລິກາມີອັດຕາພາສີທີ່ຕ່ຳນັ້ນ ແມ່ນຍ້ອນການເຈລະຈາ

ຫຼາຍຮອບພາຍໃຕ້ຂອບ WTO. ສິນຄ້າກະສິກຳ ແລະ ອຸດສາຫະກຳ ຈຳນວນ 632 ລາຍການ ແມ່ນໄດ້ຮັບການຍົກເວັ້ນອັດຕາພາສີນຳເຂົ້າ. ເຖິງຢ່າງໃດກໍ່ຕາມ, ສຳລັບສິນຄ້າບາງປະເພດເຊັ່ນ: ເຄື່ອງນຸ່ງຫົ່ມ ແລະ ຜະລິດຕະພັນແຜ່ນແພອື່ນໆ ຕົວຢ່າງ: ເກີບ ແລະ ຄັນຮົ່ມ ຊຶ່ງມີອັດຕາພາສີນຳເຂົ້າສູງ, ສະເລ່ຍ 12.68% ແລະ 15.8% ຕາມລຳດັບ. ການທີ່ ສປປ ລາວ ບໍ່ໄດ້ຮັບສິດທິພິເສດດ້ານການຄ້າແບບທົ່ວໄປ (GSP) ຈາກສະຫະລັດອາເມລິການັ້ນ ເຮັດໃຫ້ຜູ້ຜະລິດເຄື່ອງນຸ່ງຫົ່ມຢູ່ໃນທ່າເສຍປຽບ ຖ້າສົມທຽບກັບປະເທດອື່ນໆ ທີ່ໄດ້ຮັບສິດດັ່ງກ່າວເຊັ່ນ: ອາຟຣິກາ ແລະ ປະເທດໃນຂົງເຂດຄາເລບຽນ.

ນອກຈາກນີ້, ອາເມລິກາຫ້າມ ແລະ ຈຳກັດການນຳເຂົ້າສິນຄ້າບາງປະເພດເຊັ່ນ: ເຄື່ອງດື່ມປະເພດເຫຼົ້າ, ສັດລ້ຽງ ແລະ ຜະລິດຕະພັນຈາກສັດ, ຢາບາງປະເພດ, ປືນ ແລະ ອາວຸດ ແລະ ອຸປະກອນຮັບໃຊ້ສົງຄາມ, ໝາກໄມ້, ໝາກຖົ່ວ, ຊີ້ນ ແລະ ຜະລິດຕະພັນຊີ້ນ, ສັດປີກ ແລະ ຜະລິດຕະພັນສັດປີກ, ນ້ຳມັນເຊື້ອໄຟ ແລະ ຜະລິດຕະພັນນ້ຳມັນເຊື້ອໄຟ, ແລະ ພືດຜັກ. ສະນັ້ນ, ການນຳເຂົ້າສິນຄ້າ ເຫຼົ່ານັ້ນຕ້ອງໄດ້ຜ່ານໜ່ວຍງານຮັບຜິດຊອບສະເພາະຂອງອາເມລິກາ; ຍົກຕົວຢ່າງ: ໃນການນຳເຂົ້າໝາກໄມ້, ຜັກ, ແລະ ພືດຜັກປະເພດຖົ່ວ ຕ້ອງໄດ້ຜ່ານການອະນຸຍາດຈາກກົມກະສິກຳເປັນຕົ້ນ.

# ຂັ້ນຕອນທີ່ຕ້ອງພິຈາລະນາກ່ອນການ
# ສົ່ງອອກ





ເພື່ອນຳໃຊ້ກາລະໂອກາດເຂົ້າສູ່ຕະຫຼາດທີ່ກ່າວມາຂ້າງເທິງນັ້ນ, ຜູ້ສົ່ງອອກຕ້ອງໄດ້ເອົາໃຈໃສ່ບາງຂັ້ນຕອນສຳຄັນທີ່ມີລາຍລະອຽດດັ່ງລຸ່ມນີ້:

**ຂັ້ນຕອນທີ 1**: ກວດສອບລະຫັດພາສີ ແລະ ສິນຄ້າທີ່ຕ້ອງການສົ່ງອອກນັ້ນໄດ້ຮັບການຫຼຸດອັດຕາພາສີນຳເຂົ້າຫຼືບໍ່.

**ຂັ້ນຕອນທີ 2**: ກວດເບິ່ງວ່າສິນຄ້າທີ່ຕ້ອງການສົ່ງອອກນັ້ນ ນອນໃນບັນຊີໄດ້ຮັບສິດທິພິເສດຈາກປະເທດນຳເຂົ້າຫຼືບໍ່ ເພາະມີບາງລາຍການສິນຄ້າທີ່ຖືກຍົກເວັ້ນບໍ່ໃຫ້ສິດທິພິເສດ.

**ຂັ້ນຕອນທີ 3**: ກວດສອບຂໍ້ຮຽກຮ້ອງທາງດ້ານແຫຼ່ງກຳເນີດຂອງສິນຄ້ານັ້ນໃນລາຍລະອຽດ ສະເໜີໃຫ້ປະສານກັບພະແນກຄຸ້ມຄອງໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ, ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ.

**ຂັ້ນຕອນທີ 4**: ກວດສອບເງື່ອນໄຂວິທີການຈັດສົ່ງສິນຄ້າ ເພາະອາດຈະມີລະບຽບການສະເພາະຂອງປະເທດນຳເຂົ້ານັ້ນທີ່ກຳນົດໃຫ້ມີການຂົນສົ່ງສິນຄ້າໄປປະເທດປາຍທາງໂດຍກົງ ໂດຍບໍ່ມີການພັກຢູ່ສາງ ຫຼື ການຜະລິດເພີ່ມໃນປະເທດທີສາມ.

**ຂັ້ນຕອນທີ 5**: ກະກຽມ ແລະ ປະກອບເອກະສານຢັ້ງຢືນແຫຼ່ງກຳເນີດສິນຄ້າໃຫ້ຖືກຕາມການຮຽກຮ້ອງຂອງປະເທດນຳເຂົ້າ ໂດຍໃຫ້ມີການຢັ້ງຢືນຮັບຮອງຈາກກົມການນຳເຂົ້າ-ສົ່ງອອກ, ຫຼື ພະແນກອຸດສາຫະກຳ ແລະ ການຄ້າຂອງແຂວງ.

**ຂັ້ນຕອນທີ 6**: ຈັດສົ່ງເອກະສານຕ່າງໆ ທີ່ຈຳເປັນໃນການສົ່ງອອກສິນຄ້າໃຫ້ຫ້ອງການພາສີຂອງປະເທດປາຍທາງ.

ຂັ້ນຕອນທີ່ກ່າວມາຂ້າງເທິງນັ້ນ ນຳໃຊ້ສ່ວນໃຫຍ່ກັບການສົ່ງອອກພາຍໃຕ້ລະບົບສິດທິພິເສດທາງການຄ້າແບບທົ່ວໄປ ແລະ ເຂດການຄ້າເສລີຕ່າງໆ. ແຕ່ສຳລັບ ການສົ່ງອອກແບບທົ່ວໄປທີ່ບໍ່ນອນໃນລະບົບສິດທິພິເສດເຊັ່ນ: ສະ

ທະລັດອາເມລິກາ ແມ່ນບໍ່ຈຳເປັນຕ້ອງມີແບບຟອມຢັ້ງຢືນແຫຼ່ງກຳເນີດ ແຕ່ຕ້ອງປະກອບເອກະສານເພື່ອຍື່ນຕໍ່ເຈົ້າໜ້າທີ່ພາສີຂອງປະເທດນຳເຂົ້າຄື:

- ໃບແຈ້ງລາຄາ (Commercial Invoice)
- ເອກະສານຫຸ້ມຫໍ່ (Packing Lists)
- ໃບຂົນສົ່ງທາງເຮືອ (Bill of lading) ຫຼື ໃບຂົນສົ່ງທາງຍົນ (Airway Bill), ຫຼື ໃບຂົນສົ່ງທາງບົກ (Carrier's Certificate).
- ເອກະສານກ່ຽວຂ້ອງອື່ນໆ ທີ່ປະເທດນຳເຂົ້າອາດຈະຕ້ອງການເພີ່ມເຕີມ.

# ແບບຟອມທີ່ນຳໃຊ້ໃນການສົ່ງອອກ ສິນຄ້າໄປແຕ່ລະປະເທດ





| ລ/ດ | ປະເທດ | ພາຍໃຕ້ຂອບ | ແບບຟອມ ທີ່ນໍາໃຊ້ |
|---|---|---|---|
| 1. | ການາດາ, ສະວິດ ເຊີແລນ, ນອກແວ, ຕວກກີ, ຣັດເຊຍ, ຍີ່ປຸ່ນ | ລະບົບສິດທິພິເສດທາງການຄ້າ ແບບທົ່ວໄປ (GSP) | ຟອມ A |
| 2. | ອີຢູ (27 ປະເທດ) | ທຸກສິ່ງທຸກຢ່າງ ຍົກເວັ້ນອາວຸດ (EBA) | ຟອມ A |
| 3. | ສ ເກົາຫຼີ, ຈີນ-ໄຕ້ຫວັນ | ພາສີນໍາເຂົ້າພິເສດສໍາລັບປະ ເທດດ້ອຍພັດທະນາ | C/O ສະ ເພາະ ສ. ເກົາຫລີ, ແລະ ຈີນ- ໄຕ້ຫວັນ |
| 4. | ໄທ, ມາເລເຊຍ, ອິນໂດເນເຊຍ, ບຣູ ໄນ, ຟີລິປີນ. | ສິດທິພິເສດເພື່ອການເຊື່ອມ ໂຍງເສດຖະກິດເຂົ້າອາຊຽນ (AISP) | ຟອມ AISP |
| 5. | ສະມາຊິກອາຊຽນ | ເຂດການຄ້າເສລີອາຊຽນ (AFTA/CEPT) | ຟອມ D |
| 6. | ສປ ຈີນ | ການປະຕິບັດແບບພິເສດ ແລະ ແຕກຕ່າງ (SPT) | ຟອມ SPT |
| 7. | ສປ ຈີນ | ໂຄງການສ້າງຜົນປະໂຫຍດເສດ ຖະກິດໃນເບື້ອງຕົ້ນ (EHP) | ຟອມ E |
| 8. | ສປ ຈີນ, ອິນເດຍ, ສ.ເກົາຫລີ | ສັນຍາການຄ້າອາຊີ-ປາຊີຟິກ | ຟອມ C/O ສະເພາະ APTA |

| | | | |
|---|---|---|---|
| 9. | ສ ເກົາຫລີ | ສັນຍາການຄ້າເສລີ ອາຊຽນ-ສ.ເກົາຫລີ | ຟອມ AK |
| 10. | ຍີ່ປຸ່ນ | ສັນຍາການຄ້າເສລີ ອາຊຽນ-ຍີ່ປຸ່ນ | ຟອມ AJ |
| 11. | ສສ ຫວຽດນາມ | ບູລິມະສິດພາສີຂາເຂົ້າຊຶ່ງກັນແລະ ກັນ ລະຫວ່າງ ສປປ ລາວ ແລະ ສສ ຫວຽດນາມ | ຟອມ S |
| 12. | ອິດສະຕາລີ | ລະບົບສິດທິພິເສດທາງດ້ານການຄ້າຂອງອົດສະຕາລີ (ASTP) | ໃບແຈ້ງລາຄາ |
| 13. | ອິນເດຍ | ອັດຕາພາສີພິເສດ ແລະ ຍົກເວັ້ນພາສີຂອງອິນເດຍ (DFTP) | ຟອມ DFTP |

# ແຫຼ່ງຂໍ້ມູນເພີ່ມເຕີມ







1. **ອາຊຽນ**
   - ອັດຕາພາສີຜ່ອນຜັນແບບສິດທິພິເສດ ທີ່ມີຜົນບັງຄັບໃຊ້ຮ່ວມກັນ (CEPT)
     http://www.aseansec.org/12025.htm
     http://www.aseansec.org/economic/afta/2001_cept_package/Lao PDR2001
     http://www.aseansec.org/aftatariffs.asp
   - ສຳລັບ ຂໍ້ມູນກ່ຽວກັບ AISP, ກະລຸນາພົວພັນກັບກົມນະໂຍບາຍການຄ້າຕ່າງປະເທດ, ກະຊວງອຸດສາຫະກຳ ແລະ ການຄ້າ

2. **ສັນຍາການຄ້າອາຊີ-ປາຊີຟິກ** (Asia Pacific Trade Agreement/ APTA)
   - ຂໍ້ມູນກ່ຽວກັບ APTA:
     http://www.unescap.org/tid/apta.asp

3. **ອົດສະຕາລີ**
   - ຂໍ້ມູນເພີ່ມເຕີມກ່ຽວກັບການກວດເຊື້ອພະຍາດຂອງອົດສະຕາລີ
     http://www.affa.gov.au
   - ຂໍ້ມູນເພີ່ມເຕີມກ່ຽວກັບການຊອກຫາຄູ່ຄ້າ
     http://www.yellowpagees.com.au

4. **ການາດາ**
   - ການເຂົ້າສູ່ຕະຫຼາດສຳລັບ ປະເທດດ້ອຍພັດທະນາ
     http://cbsa-asfc.gc.ca/publications/pub/rc4322-eng.html#d
   - ການກຳນົດແຫຼ່ງກຳເນີດສິນຄ້າ
     http://cbsa-asfc.gc.ca/publications/pub/rc4322-eng.html#u
     http://cbsa-asfc.gc.ca/publications/pub/rc4322-eng.html#v

- ລາຍການສິນຄ້າທີ່ນອນໃນລະບົບສິດທິພິເສດ
  http://cbsa-asfc.gc.ca/publications/pub/rc4322-eng.html#j

5. **ສາທາລະນະລັດ ປະຊາຊົນ ຈີນ**
   - ກະຊວງການຄ້າຈີນ
     http://english.mofcom.gov.cn/aarticle/counselorsreport/europereport/200811058767l1.html

6. **ສະຫະພາບເອີຣົບ**
   - ຂໍ້ມູນກ່ຽວກັບລະຫັດພາສີ ແລະ ອັດຕາພາສີນຳເຂົ້າຂອງອີຢູ
     http://ec.europa.eu/taxation_customs/dds/en/home.htm
   - ຂໍ້ມູນກ່ຽວກັບລະບຽບແຫຼ່ງກຳເນີດສິນຄ້າ
     http://ec.europa.eu/taxation_customs/customs/customs_duties/rules_origin/preferential/article_781_en.htm
   - ສູນສະຖິຕິກາງ: ຫ້ອງການຜູ້ຕາງໜ້າອີຢູ ປະຈຳ ສປປ ລາວ
     http://www.dellao.cec.en.int/en/index.htm
   - ຂໍ້ມູນພື້ນຖານຂອງອີຢູ
     http://www.eiu.com/
   - ລາຍການສິນຄ້າທີ່ນອນໃນລະບົບສິດທິພິເສດ
     http://www.delta.cec.eu.int/bic/teriff_preferences_GSP.htm
     http://cbsa-asfc.gc.ca/publications/pub/rc4322-eng.html#v)

7. **ຍີ່ປຸ່ນ**
   - ລາຍການສິນຄ້າທີ່ນອນໃນລະບົບສິດທິພິເສດ
     http://www.mofa.go.jp/policy/economy/gsp/explain.html#08
   - ລະບຽບແຫຼ່ງກຳເນີດສິນຄ້າ

http://www.mofa.go.jp/policy/economy/gsp/explain.html#ORIGIN

- ຕົວຢ່າງແບບຟອມຢັ້ງຢືນແຫຼ່ງກໍາເນີດສິນຄ້າ
  http://www.mofa.go.jp/policy/economy/gsp/explain.html#09

8. **ສາທາລະນະລັດ ເກົາຫລີ**

- ນະໂຍບາຍການຄ້າຂອງ ສ.ເກົາຫລີ
  http://www.mke.go.kr/language/eng/policy/Tpolicies_03.jsp#

9. **ສະຫະພັນຣັດເຊຍ**

- ການສົ່ງອອກ ແລະ ພາສີນໍາເຂົ້າ
  http://www.exportsupport.ru/1:en/NEWS*cardnews?free=540509
  http://www.customs.ru/en

10. **ລາຊະອານາຈັກໄທ**

- ພາບລວມເສດຖະກິດ
  www.moc.go.th
- ລະບຽບແຫຼ່ງກໍາເນີດສິນຄ້າ
  www.dft.go.th

11. **ສະຫະລັດອາເມລິກາ**

- ລະຫັດພາສີ/HTS: ປຶ້ມລະຫັດພາສີອາເມລິກາ
  http://hts.usitc.gov
  http://www.usitc.gov/tata/hts/byChapter/2006.htm
- ລະບຽບການສະເພາະກ່ຽວກັບການນໍາເຂົ້າສິນຄ້າກະສິກໍາ
  http://www.aphis.usda.gov/plant_health/lacey_act/index.shtml

# ຕາຕະລາງບັນຊີຫຼຸດຜ່ອນອັດຕາພາສີ
# ພາຍໃຕ້ຂອບຕ່າງໆທີ່ບັນຈຸ
# ໃນແຜ່ນຊີດີ





1. **ອົດສະຕາລີ**

   - ບັນຊີລາຍການສິນຄ້າໃນຂອບສັນຍາການຄ້າເສລີອາຊຽນ-ອົດສະຕາລີ-ນິວຊີແລນຂອງອົດສະຕາລີ-ນິວຊີແລນ

2. **ບຣູໄນ**

   - ລາຍການບັນຊີສິນຄ້າພາຍໃຕ້ສັນຍາເຂດການຄ້າເສລີອາຊຽນ (AFTA/CEPT) ຂອງບຣູໄນ

3. **ສປ ຈີນ**

   - ບັນຊີລາຍການສິນຄ້າໃນໂຄງການສ້າງຜົນປະໂຫຍດເສດຖະກິດໃນເບື້ອງຕົ້ນ (EHP)
   - ບັນຊີລາຍການສິນຄ້າໃນຂອບການປະຕິບັດແບບພິເສດ ແລະ ແຕກຕ່າງ (SPT)
   - ບັນຊີລາຍການສິນຄ້າໃນຂອບພາສີນຳເຂົ້າພິເສດສຳລັບປະເທດດ້ອຍພັດທະນາຂອງຈີນ-ໄຕ້ຫວັນ
   - ບັນຊີລາຍການສິນຄ້າໃນຂອບສັນຍາການຄ້າເສລີອາຊຽນ-ຈີນ (ACFTA) ຂອງຈີນ
   - ບັນຊີລາຍການສິນຄ້າໃນຂອບສັນຍາການຄ້າອາຊີ-ປາຊີຟິກ (APTA) ຂອງຈີນ
     - ບັນຊີຫຼຸດຜ່ອນອັດຕາພາສີພາຍໃນ
     - ບັນຊີຫຼຸດຜ່ອນອັດຕາພາສີພິເສດສຳລັບສະມາຊິກທີ່ເປັນປະເທດດ້ອຍພັດທະນາ

4. **ອິນເດຍ**

   - ບັນຊີລາຍການສິນຄ້າໃນລະບົບສິດທິພິເສດທາງດ້ານການຄ້າ (GSP) ຂອງອິນເດຍໃຫ້ແກ່ປະເທດດ້ອຍພັດທະນາ

- ບັນຊີລາຍການສິນຄ້າໃນຂອບສັນຍາການຄ້າອາຊີ-ປາຊີຟິກ (APTA) ຂອງອິນເດຍ
  - ບັນຊີຫຼຸດຜ່ອນອັດຕາພາສີພາຍໃນ
  - ບັນຊີຫຼຸດຜ່ອນອັດຕາພາສີພິເສດສຳລັບສະມາຊິກທີ່ເປັນປະເທດດ້ອຍພັດທະນາ

5. **ອິນໂດເນເຊັຍ**
   - ລາຍການບັນຊີສິນຄ້າພາຍໃຕ້ສັນຍາເຂດການຄ້າເສລີອາຊຽນ (AFTA/CEPT) ຂອງອິນໂດເນເຊັຍ

6. **ຍີ່ປຸ່ນ**
   - ບັນຊີລາຍການສິນຄ້າໃນລະບົບສິດທິພິເສດທາງດ້ານການຄ້າ (GSP) ຂອງຍີ່ປຸ່ນໃຫ້ແກ່ປະເທດດ້ອຍພັດທະນາ
   - ບັນຊີລາຍການສິນຄ້າໃນຂອບສັນຍາການຄ້າເສລີອາຊຽນ-ຍີ່ປຸ່ນ (AJFTA) ຂອງຍີ່ປຸ່ນ

7. **ມາເລເຊັຍ**
   - ລາຍການບັນຊີສິນຄ້າພາຍໃຕ້ ລະບົບສິດທິພິເສດເພື່ອການເຊື່ອມໂຍງເຂົ້າອາຊຽນ (AISP) ຂອງມາເລເຊັຍ
   - ລາຍການບັນຊີສິນຄ້າພາຍໃຕ້ສັນຍາເຂດການຄ້າເສລີອາຊຽນ (AFTA/CEPT) ຂອງມາເລເຊັຍ

8. **ຟີລິບປິນ**
   - ລາຍການບັນຊີສິນຄ້າພາຍໃຕ້ ລະບົບສິດທິພິເສດເພື່ອການເຊື່ອມໂຍງເຂົ້າອາຊຽນ (AISP) ຂອງຟີລິບປິນ
   - ລາຍການບັນຊີສິນຄ້າພາຍໃຕ້ສັນຍາເຂດການຄ້າເສລີອາຊຽນ (AFTA/CEPT) ຂອງຟີລິບປິນ

## 9. ສາທາລະນະລັດ ເກົາຫລີ

- ບັນຊີລາຍການສິນຄ້າໃນລະບົບສິດທິພິເສດທາງດ້ານການຄ້າ (GSP) ຂອງ ສ.ເກົາຫລີ ໃຫ້ແກ່ປະເທດດ້ອຍພັດທະນາ
- ບັນຊີລາຍການສິນຄ້າໃນຂອບສັນຍາການຄ້າເສລີອາຊຽນ-ສ.ເກົາຫລີ (AKFTA) ຂອງ ສ.ເກົາຫລີ
- ບັນຊີລາຍການສິນຄ້າໃນຂອບສັນຍາການຄ້າອາຊີ-ປາຊີຟິກ (APTA) ຂອງ ສ.ເກົາຫລີ
  - ບັນຊີຫຼຸດຜ່ອນອັດຕາພາສີພາຍໃນ
  - ບັນຊີຫຼຸດຜ່ອນອັດຕາພາສີພິເສດສຳລັບສະມາຊິກທີ່ເປັນປະເທດດ້ອຍພັດທະນາ

## 10. ລັດເຊຍ

- ບັນຊີລາຍການສິນຄ້າໃນລະບົບສິດທິພິເສດທາງດ້ານການຄ້າ (GSP) ຂອງຣັດເຊຍໃຫ້ແກ່ປະເທດດ້ອຍພັດທະນາ

## 11. ໄທ

- ລາຍການບັນຊີສິນຄ້າພາຍໃຕ້ ລະບົບສິດທິພິເສດເພື່ອການເຊື່ອມໂຍງເຂົ້າອາຊຽນ (AISP) ຂອງໄທ
- ລາຍການບັນຊີສິນຄ້າພາຍໃຕ້ສັນຍາເຂດການຄ້າເສລີອາຊຽນ (AFTA/CEPT) ຂອງໄທ

## 12. ຕວກກີ

- ບັນຊີລາຍການສິນຄ້າໃນລະບົບສິດທິພິເສດທາງດ້ານການຄ້າ (GSP) ຂອງຕວກກີໃຫ້ແກ່ປະເທດດ້ອຍພັດທະນາ

13. ສສ ຫວຽດນາມ

- ສາລະບານ 1b: ບັນຊີລາຍການສິນຄ້າ ທີ່ໄດ້ຮັບການຫຼຸດຜ່ອນອັດຕາພາສີ 50% ອີງຕາມຂໍ້ຕົກລົງໃຫ້ບູລິມະສິດຂາ ເຂົ້າຊຶ່ງກັນແລະ ກັນ ລະຫວ່າງ ສປປ ລາວ ແລະ ສສ ຫວຽດ ນາມ
- ສາລະບານ 2b: ບັນຊີລາຍການສິນຄ້າທີ່ຍົກເວັ້ນຈາກການຫຼຸດຜ່ອນອັດຕາພາສີຂອງຫວຽດນາມ ອີງຕາມຂໍ້ຕົກລົງໃຫ້ບູລິມະສິດຂາເຂົ້າຊຶ່ງກັນ ແລະ ກັນ ລະຫວ່າງ ສປປ ລາວ ແລະ ສສ ຫວຽດນາມ
- ລາຍການບັນຊີສິນຄ້າພາຍໃຕ້ສັນຍາເຂດການຄ້າເສລີອາຊຽນ (AFTA/CEPT) ຂອງຫວຽດນາມ